<u>ຄະນະຜູ້ຈັດທຳ ຄຳແນະນຳສຳລັບຄຣູສອນ</u>

**Copyright © 2007 by BAPTISTWAY PRESS®.**
ສງວນລິກຂະສິດ

ອະນຸດຍາດໃຫ້ທາງຄຣິສຕະຈັກເຮັດກອບປີ້ໄດ້ຕາມຄວາມຕ້ອງການ ເພື່ອໃຊ້ຢູ່ພາຍໃນຄຣິສຕະຈັກ. ຫ້າມຂາຍ, ຫ້າມແຈກຢາຍ, ຫລືໃຊ້ໃນທາງອື່ນໆ ໂດຍທີ່ບໍ່ໄດ້ຂຽນຄຳຮ້ອງຂໍອະນຸຍາດເສັຽກ່ອນ. ຖ້າຢາກຊາບລາຍລະອຽດເພີ້ມເຕີມ ກະຣຸນາຕິດຕໍ່ໄປທີ່ BAPTISTWAY PRESS, Baptist General Convention of Texas, 333 North Washington, Dallas, TX 75246-1798.

BAPTISTWAY PRESS® is registered in U.S. Patent and Trademark Office.

ຂໍ້ຄວາມພຣະຄັມພີອ້າງອີງໃນບົດຮຽນນີ້ ໄດ້ຄັດມາຈາກປື້ມພຣະຄັມພີຕາມທີ່ໄດ້ບົ່ງຊື່ໄວ້ ລວມທັງການແປ, ແລະອັນທິຈິດທະບຽນສງວນລິຂະສິດຂອງປື້ມພຣະຄັມພີເຫລົ່ານັ້ນ.

ພິມອອກຄັ້ງທຳອິດ: ເດືອນ ມີນາ, ໒004

BAPTISTWAY Management Team

Executive Director, Baptist General Convention of Texas: Charles Wade
Director, Missions, Evangelism, and Ministry Team: Wayne Shuffield
Director, Bible Study/Discipleship Center: Dennis Parrott

Publishing consultant: Ross West, Positive Difference Communications

Language Materials Team

Teaching Procedures Writer for Lesson 1- 3
Bounhome Phommachanh, Lao-Thai Baptist, San Antonio, Texas
Editor for Lesson 1- 3
Phaisane Somsith, Grace Baptist Church, Dallas, Texas

Teaching Procedures Writer for Lesson 4, 5
Bounheng Phongpraphan, First Lao Baptist Church, Amarillo, Texas
Editor for Lesson 4, 5
Phaisane Somsith, Grace Baptist Church, Dallas, Texas

Teaching Procedures Writer for Lesson 6- 10
Sidney Kahn, Saginaw Community Church, Fort Worth, Texas
Editor for Lesson 6-10
Phaisane Somsith, Grace Baptist Church, Dallas, Texas

Teaching Procedures Writer for Lesson 11-13 and Easter Lesson
Houmphanh Vongsurith, First Laotian Baptist Church, Dallas, Texas
Editor for Lesson 11-13 and Easter Lesson
Phaisane Somsith, Grace Baptist Church, Dallas, Texas

Facilitator for the LAOTIAN TEAM
Joe Haag, Associate Director, Christian Life Commission, Baptist General Convention of Texas

Patty Lane, Director, Office of Intercultural Initiatives, Baptist General Convention of Texas
Nelda P. Williams, Facilitators Coordinator and Manager, Curriculum Development Office

# ຄຳແນະນຳສຳລັບຄຣູສອນ
# ບົດຮຽນທີ 1
# ເນັ້ນໜັກໃນອົງພຣະເຢຊູ

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** ກິຈການ 1: 1-14
**ຂໍ້ພຣະຄັມພີສຳລັບເບື້ອງຫລັງ:** ກິຈການ ບົດທີ 1
**ຈຸດສຳຄັນຂອງບົດຮຽນນີ້:** ສາວົກຂອງພຣະເຢຊູທຸກໆຄົນ ຈຳເປັນຕ້ອງເນັ້ນໜັກໃສ່ອົງພຣະເຢຊູ
**ຄຳຖາມເພື່ອສຳຣວດ:** ການເສີມຂຍາຍໂບດທີ່ແທ້ຈິງແລ້ວ ຕ້ອງເນັ້ນໜັກໃສ່ອົງພຣະເຢຊູ
**ຈຸດປະສົງຂອງບົດຮຽນ:** ເພື່ອຈະບົ່ງບອກເຖິງຫົນທາງທີ່ພວກສາວົກທັງຫລາຍໄດ້ເນັ້ນໜັກໃສ່ອົງພຣະເຢຊູ ແລ້ວ
ມາຕີຣາຄາວ່າໂບດຂອງພວກເຮົາ ໄດ້ພາກັນຕິດຕາມເສັ້ນທາງນີ້ແລ້ວຫລືຍັງ.

**ຄົ້ນຄວ້າ ພ້ອມກັບການປະຕິບັດ**

- ຢັ້ງຢືນວ່າ ພຣະຄັມພີມີອຳນາດໃນການນຳພາຊີວິດ ແລະໃນການປ່າວປະກາດ
- ແບ່ງປັນພຣະກິດຕິຄຸນໃຫ້ແກ່ທຸກໆຄົນ
- ເສີມຂຍາຍການເຕີບໃຫຍ່ຂຍາຍຕົວຢ່າງບໍ່ຢຸດຢັ້ງ
- ເຕົ້າໂຮມຄອບຄົວທີ່ເຊື່ອ ເພື່ອຈະກາຍມາເປັນຜູ້ຮັບໃຊ້
- ເຊື່ອຟັງແລະຮັບໃຊ້ພຣະເຢຊູ ດ້ວຍຮ່າງກາຍ, ຈິດວິນຍານ, ແລະຄວາມຄິດຕ່າງໆ
- ຍົກສູງທຸກໆຄົນ ໂດຍເຫັນວ່າ ພວກເຂົາກໍແມ່ນພຣະສາຍາຂອງພຣະເຈົ້າ
- ສ້າງຜູ້ນຳ

## ຄຳນຳ

**ນຳເຣື່ອງເຂົ້າສູ່ຊີວິດຈິງ**

1. ໃຫ້ຊອກຫາເຈັ້ຍຫລືໂປສເຕີ້ ທີ່ມີຮູບໂບດ. ຮູບທາງນອກໂບດ ແລະຮູບທາງໃນໂບດດ້ວຍ. ຖ້າມີຮູບເຖົ້າແກ່ເກົ່າໆ ກໍຍິ່ງເປັນການດີຫລາຍ. ຫລືໃຊ້ປຶ້ມ Directories ເກົ່າຂອງໂບດກໍໄດ້. ວາງໄວ້ຕໍ່ໜ້າຫ້ອງຮຽນ.

2. ຄຣູຈະຂຽນຫົວຂໍ້ຂອງບົດຮຽນ ໃສ່ກະດານ, ແລະພຣະຄັມພີຢ່າງຈະແຈ້ງ.
   - ຈະພາໃຫ້ເຮົາເຂົ້າໃຈໃນຄຳຖາມທີ່ເລິກເຊິ່ງໄດ້ (1:1-2)
   - ຮຽກຮ້ອງໃຫ້ພວກເຮົາລໍຖ້າຂອງພຣະຣາຊທານຈາກພຣະເຈົ້າ (1:3-5)
   - ແມ່ນການຍອມຢູ່ໃນອານາຈັກແລະອຳນາດຂອງພຣະອົງ (1:6-8)
   - ເຂົ້າຮ່ວມກັນອະທິຖານເປັນປະຈຳ (1:9-14)

3. ທ່ານມັກຖ່າຍຮູບບໍ່? ທ່ານມັກບັນທຶກແບບໃດຫລາຍກວ່າໝູ່? (ຖ່າຍຮູບ, ຂຽນລົງໃນເຈັ້ຍ, ອັດໃສ່ເທັບ) ຫລັງຈາກທີ່ທ່ານໄປທ່ອງທ່ຽວມາ. ນີ້ຄືຈຸດປະສົງຂອງປຶ້ມກິຈການ ທີ່ເຮົາຈະໄດ້ຮຽນນຳກັນໃນຂັ້ນຕໍ່ໄປ. ແທນທີ່ຈະເປັນຮູບພາບ ລູກາໄດ້ບັນທຶກໄວ້ໃນປຶ້ມ ເຫດການ, ຜູ້ຄົນ, ສະຖານທີ່, ແລະເວລາໂອກາດຕ່າງໆ. ໃນການຮຽນ

ນີ້ພວກເຮົາຈະໄດ້ເຫັນຮູບພາບຂອງໂບດຂອງພຣະເຢຊູຢ່າງແທ້ຈິງ.

<u>ນໍາພາສຶກສາພຣະຄັມພີ</u>

4. ໃນເວລາທີ່ເຮົາຮຽນບົດຮຽນນີ້ ໃຫ້ພວກເຮົາຖາມຕົວເອງຕລອດເວລາວ່າ "ເຮົາໄດ້ເນັ້ນໜັກໃສ່ພຣະເຢຊູຫລາຍປານໃດ?" "ການປ່າວປະກາດຂອງໂບດມີຫຍັງແດ່?" ປື້ມນີ້ຂຽນຂື້ນມາແມ່ນແນໃສ່ອັນໃດ, ລາວມີຈຸດປະສົງຫຍັງ? ຄຣູຈະເປັນຜູ້ແນະນໍາປື້ມກິຈການ.

5. ໃຫ້ນັກຮຽນອ່ານພຣະຄັມພີ ກິຈການຂໍ້ ບົດ 1:1-2.
ຖາມ: ພວກເຮົາຮູ້ບໍ່ວ່າ ທີໂອຟີໂລແມ່ນໃຜ? ທ່ານຄິດຢ່າງໃດກ່ຽວກັບຄໍາຖາມທີ່ພວກສາວົກ ແລະຄຣິສຕະຈັກພາກັນຖາມ ໃນການຄືນພຣະຊົນຂອງພຣະເຢຊູ? ຄຸນນະລັກສະນະທີ່ເປັນສູນກາງຂອງປື້ມນີ້ແມ່ນໃຜ? ຄຣູຈະອະທິບາຍໃຫ້ນັກຮຽນຢ່າງຈະແຈ້ງ, ຄຣູຕ້ອງຮຽນຫລືອ່ານບົດຮຽນກ່ອນ

6. ເອີ້ນນັກຮຽນຄົນຕໍ່ໄປ ໃຫ້ອ່ານ ຂໍ້ 3 ຫາຂໍ້ 5. ໃຫ້ຄຣູອະທິບາຍເຖິງການລໍຖ້າພຣະວິນຍານບໍຣິສຸດ. ທ່ານເຄີຍມີປະສົບການໃນການລໍຖ້າພຣະເຈົ້າບໍ? ຄຣິສຕະຈັກຂອງພວກເຮົາເດ, ເຄີຍໄດ້ລໍຖ້າພຣະເຈົ້າບໍ່?

7. ເອີ້ນນັກຮຽນໃຫ້ອ່ານ ຂໍ້ 6 ຫາຂໍ້ 8 . ຖາມ: ຮັບບັບຕິສະມາໂດຍພຣະວິນຍານໝາຍຄວາມວ່າຢ່າງໃດ? ປ່ອຍໂອກາດໃຫ້ນັກຮຽນຕອບ ແລ້ວຄຣູຈິ່ງອະທິບາຍຕາມປື້ມບົດຮຽນ. ຖາມ: ການຮັບບັບຕິສະມາມີຈຸດປະສົງຫຍັງ? ຈະມີພລັງອັນໃດແດ່ທີ່ພຣະອົງຈະຈັດຕຽມໃຫ້ພວກເຮົາ? ພລັງອໍານາດນັ້ນຈະນໍາພາພວກເຮົາໃຫ້ເຮັດຫຍັງແດ່?

8. ໃຫ້ອີກຄົນນື່ງອ່ານ ຂໍ້ 9 ຫາ ຂໍ້ 14 ຖາມ: ເປັນຫຍັງສາວົກຂອງພຣະເຢຊູຈິ່ງໃຊ້ເວລາອະທິຖານຫລາຍແທ້? (ພວກເຂົາຖືກສອນມາຢ່າງນັ້ນບໍ່? ພວກເຂົາເຫັນຕົວຢ່າງບໍ່? ພຣະອົງສັ່ງເຂົາບໍ່? ພວກເຂົາຈໍາເປັນບໍ່?)

9. ຖາມຄໍາຖາມທີ 5 ໃນເຈັ້ຍບົດຮຽນ " ທ່ານເຄີຍໄດ້ຮ່ວມກຸ່ມອະທິຖານບໍ່?"

10. ຖາມຄໍາຖາມທີ 1 ໃນເຈັ້ຍບົດຮຽນ "ຖ້າພວກເຮົາຫາກບໍ່ເປັນຕົວຢ່າງໃນການເປັນຄຣິສຕຽນແລ້ວ, ຄົນລຸ້ນຕໍ່ໄປຈະເປັນຢ່າງໃດ?" ເປັນຫຍັງຈິ່ງເປັນຢ່າງນັ້ນ?

11. ຄຣິສຕະຈັກຂອງພວກເຮົາໄດ້ພາກັນເນັ້ນໜັກໃສ່ອົງພຣະເຢຊູຫລືບໍ່? ຖ້າບໍ່ ພວກເຮົາຄວນຈະເຮັດຢ່າງໃດ?

12. ອະທິຖານປິດຫ້ອງຮຽນ

*ສາ. ດຣ. ບຸນໂຮມ ພົມມະຈັນ*

# ຄຳແນະນຳສຳລັບຄຣູສອນ

# ບົດຮຽນທີ 2

# ພະລັງແລະອຳນາດຕໍ່ຜູ້ປະກາດພຣະທັມ

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** ກິຈການ 2:1-24

**ຂໍ້ພຣະຄັມພີສຳລັບເບື້ອງຫລັງ:** ກິຈການ 2: 1-40

**ຈຸດສຳຄັນຂອງບົດຮຽນນີ້:** ພຣະເຈົ້າຊົງປະທານພຣະວິນຍານບໍຣິສຸດໃຫ້ແກ່ພວກສາວົກ ເພື່ອຈະໄດ້ປ່າວປະກາດເຣື່ອງຂອງພຣະເຢຊູ.

**ຄຳຖາມເພື່ອສຳຣວດ:** ພວກເຮົາອີງໃສ່ພາລະກຳລັງຂອງຕົວເອງບໍ່ ? ຫລືວ່າອີງຕາມພຣະກຳລັງຂອງວິນຍານບໍຣິສຸດຊົງນຳ.

**ຈຸດປະສົງຂອງບົດຮຽນ:** ເພື່ອຈະໄດ້ຊີ້ແຈງໃຫ້ເຫັນວ່າເມື່ອບຸກຄົນຫລືຄຣິສຕະຈັກທີ່ພຣະວິນຍານບໍຣິສຸດຊົງນຳນັ້ນ ຈະມີຫຍັງເກີດຂຶ້ນ?

**ສຶກສາຄົ້ນຄວ້າ ແລະການເນັ້ນຫນັກ**

- ຢັ້ງຢືນວ່າພຣະຄັມພີ ມີຣິດອຳນາດນຳພາຊີວິດແລະການປ່າວປະກາດ
- ແບ່ງປັນພຣະກິດຕິຄຸນຂອງພຣະເຢຊູໃຫ້ກັບທຸກໆຄົນ
- ເສີມຂຍາຍການເຕີບໃຫຍ່ຂອງຄວາມເຊື່ອ
- ຮວບຮວມເອົາຄອບຄົວທີ່ເຊື່ອໃຫ້ປະກອບສ່ວນໃນການຮັບໃຊ້
- ເຫັນທຸກຄົນເປັນສີພຣະທັດຂອງພຣະເຈົ້າ
- ເຊື່ອຟັງແລະຮັບໃຊ້ພຣະເຢຊູ ດ້ວຍສຸດກຳລັງກາຍ, ດ້ວຍສຸດຈິດວິນຍານ, ແລະດ້ວຍສຸດຄວາມຄິດທີ່ມີ
- ຈັດຕຽມຜູ້ຮັບໃຊ້ໃຫ້ພ້ອມຢູ່ສເມີ

## ນຳເຣື່ອງເຂົ້າສູ່ຊີວິດຈິງ

1. ໃຫ້ຄຣູຂຽນຫົວຂໍ້ບົດຮຽນໃສ່ກະດານຫລື ເຈັ້ຍໂປສເຕີ້ກໍໄດ້

2. ໃຫ້ເລົ່າເຣື່ອງ: ມີຊາຍຄົນນຶ່ງ ນອນແປງຣົດຂອງຕົນເອງຢູ່ໃນກາຣາ ແປງໄປແປງມາ ຣົດບໍ່ຮູ້ວ່າເປັນແນວໃດ **ເລີຍພິກອອກຈາກ**ໄມ້ຄໍ້າ ແລ້ວກໍມາທັບທີ່ໂຕຂອງລາວ. ລາວຮ້ອງຢ່າງແຮງ ເພື່ອໃຫ້ເມັຍລາວມາຊ່ວຍ. ເມື່ອເມັຍໄດ້ຍິນລາວກໍຟ້າວແລ່ນອອກມາ ແລ້ວເຫັນຜົວນອນຢູ່ກ້ອງຣົດ. ລາວຈຶ່ງແລ່ນອອກແລ່ນເຂົ້າກາຣາ ບໍ່ຮູ້ຈະເຮັດ ຢ່າງໃດ. ເມື່ອສະພາບເປັນຢ່າງນີ້ ລາວຈຶ່ງຕັດສິນໃຈໃຊ້ແຮງຈາກຕົວນ້ອຍໆຂອງລາວ ຍົກຣົດທາງຫນ້າຂຶ້ນ. ຜົວຂອງລາວກໍຄ່ອຍໆສ່ຽນ ຫຍັບອອກມາໄດ້. ເມື່ອຄົນຖາມວ່າເຈົ້າຍົກໄດ້ຄືແນວໃດ? ລາວຕອບວ່າ: ຄືມີອັນໃດອັນນຶ່ງມາຊ່ວຍຂ້ອຍ ເວລາຍົກຣົດ. ບົດຮຽນທີ່ເຮົາຈະຮຽນໃນວັນນີ້ກໍຈະຄ້າຍໆຄືກັນນັ້ນລະ. ສາວົກຂອງພຣະເຢຊູໄດ້ພະລັງມາຈາກໃສ, ພວກເຮົາບໍ່ຮູ້.

## ນຳພາການສຶກສາພຣະຄັມພີ

3. ຈຸດທີ 1 ອ່ານກິຈການ ບົດ 2:1 ບອກໃຫ້ນັກຮຽນເບິ່ງປຶ້ມພຣະຄັມພີຂອງຕົວເອງໄປນຳ. ອະທິບາຍເຖິງວັນເພັນເຕຄອສວ່າມີຄວາມສຳຄັນຢ່າງໃດໃນໝູ່ພວກຢິວ. ເບິ່ງໃນເຈັ້ຍບົດຮຽນ.

4. ຈຸດທີ 2 ໃຫ້ນັກຮຽນອ່ານ ບົດ 2:2-4 ດັງງ ຖາມ: ມີສາມຢ່າງເກີດຂຶ້ນໃນຕອນນີ້ຄືຫຍັງແດ່? (ລົມ, ໄຟ ແລະ ໄດ້ເຫັນການເວົ້າພາສາແປກໆ..)ອະທິບາຍໃຫ້ນັກຮຽນເຂົ້າໃຈໃນສາມຢ່າງນີ້. ແລະແມ່ນຫຍັງແນໄປສູ່ການເກີດຂອງຄຣິສຕະຈັກໃນສມັຍທຳອິດ.

5. ຈຸດທີ 3 ອ່ານ ບົດ 2:5-13 ຂໍໃຫ້ຄຣູຈົ່ງຕຽມອ່ານຊື່ເມືອງຕ່າງໆ ໃຫ້ຄ່ອງແຄ້ວ. ອະທິບາຍວ່າເປັນຫຍັງພວກຢິວທີ່ຢູ່ທົ່ວທຸກສາຣະທິດຈຶ່ງພາກັນມາກຸງເຢຣູຊາເລັມ. ຖ້າທ່ານຫາກເປັນຜູ້ນຶ່ງທີ່ໄປໃນທີ່ນັ້ນເໝືອນກັນ, ທ່ານຈະຕອບຄຳຖາມນີ້ວ່າຢ່າງໃດ? ແມ່ນໝາຍຄວາມວ່າຢ່າງໃດກັນແທ້?

6. ຈຸດທີ 4 ຄຣູຈະເຕືອນນັກຮຽນໃຫ້ຕັ້ງໃຈຟັງຄັກໆ ວ່າເປໂຕເທສນາກ່ຽວກັບຫຍັງ? ອ່ານ ຂໍ້ 14-24 ເປັນຫຍັງຈຶ່ງເວົ້າວ່າ ຄຳພະຍານຂອງເປໂຕບໍ່ຄືໃຜແລະກໍບໍ່ມີໃຜຄື? ຜູ້ປະກາດພຣະທັມໂຢເອນກ່າວວ່າພຣະເຈົ້າຈະຖອກເທພຣະວິນຍານລົງໃສ່ມະນຸດທັງປວງ ນັ້ນໝາຍເຖິງພວກໃດ? ພຣະເຈົ້າໄດ້ຊົງສຳເຣັດພຣະຣາຊກິດຫຽັງແດ່ໃນພຣະເຢຊູ? ເຊີນໃຫ້ນັກຮຽນໃຫ້ຄຳຄິດເຫັນກ່ຽວກັບຄຳເທສນາ ຂອງເປໂຕ

## ແນະນຳແລະໜູນໃຈໃນການປະຕິບັດ

7. ຖາມຄຳຖາມທີ 1 ແລະ 3 ໃນເຈັ້ຍບົດຮຽນ.

8. ເວົ້າຫຍໍ້ງສູ່ນັກຮຽນຟັງກ່ຽວກັບ "ຄຣິສຕຽນຄະນະເພັນເຕຄອສໂຕ" ຖາມພວກເຂົາເຈົ້າເບິ່ງວ່າພວກເຂົາມີແນວຄິດຢ່າງໃດກ່ຽວກັບຄະນະນີ້.

9. ອະທິບາຍໄວແລະສັ້ນໆວ່າ ແນ່ນອນຖ້າພຣະວິນຍານຂອງພຣະເຈົ້າຊົງນຳແລ້ວຈະຕ້ອງມີອັນໃດອັນນຶ່ງເກີດຂຶ້ນ. ທຸກວັນນີ້ຄຣິສຕະຈັກຂອງພວກເຮົາມີພຣະວິນຍານຂອງພຣະເຈົ້າຊົງນຳຫລືບໍ່?

10. ອະທິຖານຂໍການຊົງນຳຈາກພຣະເຈົ້າ ຄຣິສຕະຈັກຂອງພວກເຮົາຈຶ່ງຈະກ້າວໄປຕາມແນວທາງຂອງພຣະອົງ

11. ອະທິຖານປິດການຮຽນ

*ສຈ. ດຣ. ບຸນໂຮມ ພົມມະຈັນ*

## ຄຳແນະນຳສຳລັບຄຣູສອນ
## ບົດຮຽນທີ 3
## ຊີວິດຂອງຄຣິສຕຽນ ຕ້ອງຈະແຈ້ງໃນສັງຄົມ

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** ກິຈການ 2:41-47

**ຂໍ້ພຣະຄັມພີສຳລັບເບື້ອງຫລັງ:** ກິຈການ 2: 41-47

**ຈຸດສຳຄັນຂອງບົດຮຽນນີ້:** ຄຣິສຕຽນຕ້ອງດຳເນີນຢ່າງຈະແຈ້ງໃນສັງຄົມ--ປະກອບສ່ວນໃນການສຶກສາຮ່ຳຮຽນເຣື່ອງຂອງພຣະເຢຊູຄຣິດ ເພື່ອຄວາມຮັກຊຶ່ງກັນແລະກັນ, ການນະມັສການພຣະເຈົ້າ, ລວມທັງຜູ້ທີ່ເຊື່ອໃຫມ່ດ້ວຍ

**ຄຳຖາມເພື່ອສຳຣວດ:** ຈະ ຈະແຈ້ງໃນວົງສັງຄົມຢ່າງໃດ ເພື່ອຈະເສີມຂຍາຍອອກໄປໃນໂລກແຫ່ງຄວາມເຫັນແກ່ຕົວນີ້.

**ຈຸດປະສົງຂອງບົດຮຽນ:** ເພື່ອຈະວັດແທກຊີວິດຂອງຄຣິສຕະຈັກຂອງພວກເຮົາຕ້ອງໄດ້ເບິ່ງຄືນເຖິງຄຣິສຕະຈັກສມັຍຄັ້ງທຳອິດ ໃນກິຈການ.

### ສຶກສາຄົ້ນຄວ້າ ແລະການເນັ້ນຫນັກ

- ຢັ້ງຢືນວ່າພຣະຄັມພີ ມີຣິດອຳນາດນຳພາຊີວິດແລະການປ່າວປະກາດ
- ແບ່ງປັນພຣະກິດຕິຄຸນຂອງພຣະເຢຊູໃຫ້ກັບທຸກໆຄົນ
- ເສີມຂຍາຍການເຕີບໃຫຍ່ຂອງຄວາມເຊື່ອ
- ຮວບຮວມເອົາຄອບຄົວທີ່ເຊື່ອໃຫ້ປະກອບສ່ວນໃນການຮັບໃຊ້
- ເຫັນທຸກຄົນເປັນສິພຣະທັດຂອງພຣະເຈົ້າ
- ເຊື່ອຟັງແລະຮັບໃຊ້ພຣະເຢຊູ ດ້ວຍສຸດກຳລັງກາຍ, ດ້ວຍສຸດຈິດວິນຍານ, ແລະດ້ວຍສຸດຄວາມຄິດທີ່ມີ
- ຈັດຕຽມຜູ້ຮັບໃຊ້ໃຫ້ພ້ອມຢູ່ສເມີ

### ນຳເຂົ້າສູ່ຊີວິດຈິງ

1 ຂຽນຫົວຂໍ້ຂອງບົດຮຽນລົງໃສ່ກະດານ ພ້ອມທັງຂໍ້ພຣະຄັມພີນຳ ຊຶ່ງພວກເຮົາຈະໄດ້ຕິດຕາມເປັນຂໍ້ໆໄປ

2. ໃຫ້ຄຣູຂຽນລົງໃນເຈັ້ຽ ຈະເປັນ 3×5 ຫລືວ່າຈະຕັດເຈັ້ຽເປັນເຄິ່ງໃບກໍໄດ້. ແລ້ວຂຽນຄຳເຫລົ່ານີ້ລົງໃສ່ໃນແຕ່ລະໃບ. ຂຽນຕົວໃຫຍ່ສົມຄວນ: ເທສນາ, ບັບຕິສມາ, ສິດສອນ, ສາມັກຄີທັມ, ສິນມະຫາສນິດ, ຢາເກງນັບຖື, ນະມັສການ, ບັນເທົາທຸກ, ແລະປັບປຸງໃຫ້ເຂົ້າກັບສັງຄົມ. ລວມທັງ: ຄວາມຮູ້ສຶກ, ເນັ້ນຫນັກການສ້າງຕັ້ງສະມາຄົມ, ການສັງສັນມ່ວນຊື່ນ.
ໃຫ້ຢາຍໃຫ້ນັກຮຽນແຕ່ລະຄົນ ແລ້ວກໍບອກພວກເຂົາວ່າ: ພວກທ່ານຈະໄດ້ໃຫ້ຄຳເຫັນປະກອບສ່ວນຕາມເຣື່ອງທີ່ທ່ານໄດ້ໃນ ເຈັ້ຽນັ້ນລະ.

3. ຖາມຫ້ອງຮຽນ: ຖ້າເລືອກໄດ້ ເກີບໜັງ ແລະເກີບທັມດາ ທ່ານຈະເລືອກເອົາອັນໃດ?
ພຣະຄັມພີທີ່ມີໜ້າປົກເປັນໜັງ ແລະໜ້າປົກເປັນເຈັ້ຽທັມດາ ທ່ານຈະເອົາອັນໃດ?
ແຮມເບີເກີ້ໃສ່ຊີ້ນແທ້ ແລະ ແຮມເບີເກີ້ໃສ່ຊີ້ນທຽມ ທ່ານຈະເລືອກກິນອັນໃດ?
ຕອນຍັງບໍ່ທັນເປັນຄຣິສຕຽນ ທ່ານເຂົ້າໃຈໂບດຄືແນວໃດ?
ເວລາທ່ານເປັນຄຣິສຕຽນແລ້ວເດ ທ່ານເຫັນເປັນຄືແນວໃດ?
ທ່ານເຄີຍໄດ້ຍິນຄຳວ່າຂອງແທ້ແລະຂອງທຽມ(ຂອງປອມ) ບໍ່ ?

**ບົດຮຽນວັນນີ້ ພວກເຮົາຈະມາເບິ່ງ ຄຣິສຕະຈັກສມັຍທຳອິດວ່າພວກເຂົາ ເຮັດຢ່າງໃດກັນ.**

## <u>ສຶກສາພຣະຄັມພີ</u>

4. ຂໍຖາມຄືນໜ້ອຍນຶ່ງແດ່ວ່າອາທິດທີ່ຜ່ານມາພວກເຮົາຮຽນເຣື່ອງຫຍັງ? ສຶກສາເບິ່ງບົດເທສນາຂອງເປໂຕ. ນຳພານັກຮຽນໃຫ້ເປີດພຣະຄັມພີໄປ ກິຈການບົດທີ 2. ອ່ານຂໍ້ 41 ດັງໆ
ຖາມ: ທ່ານຈະສນັບສນູນຄຳເທສນາຂອງເປໂຕຢ່າງໃດ ໃນເມື່ອມີຄົນຈຳນວນຫລວງຫລາຍທັນມາຮັບເຊື່ອຢ່າງນີ້? ອະທິບາຍ.

5. ໃຫ້ເບິ່ງໃນເຈັ້ຽທີ່ມີຢູ່ໃນມືທ່ານ ຖ້າວ່າຄຳໃດກ່າວອອກມາກ່ຽວກັບເຈັ້ຽຂອງທ່ານແລ້ວໃຫ້ອອກມາອະທິບາຍ.
ຫົວຂໍ້ທີ 2 ອ່ານຂໍ້ທີ 41 ອີກຄັ້ງນຶ່ງ. ພວກເຮົາຈະເຫັນໄດ້ວ່າວັນນັ້ນມີຄົນເຂົ້າມາເປັນສະມາຊິກເຖິງ 3000 ຄົນ. ພວກເຂົາບໍ່ໄດ້ຢຸດຢູ່ໃນການເປັນຄຣິສຕຽນເທົ່ານັ້ນ ພວກເຮົາຈະເຮັດຢ່າງໃດຕໍ່ໄປ? ( ເອົາໃຈໃສ່ສຶກສາພຣະຄັມພີ, ຮ່ວມສາມັກຄີທັມ, ພ້ອມກັນອະທິຖານແລະພາກັນຮັບສິນມະຫາສນິດເປັນປະຈຳ. ຂໍ້ 43-45 ພວກເຂົາມີຄວາມຢຳເກງນັບຖືພຣະເຈົ້າ ແລະຍັງນັບຖືຊຶ່ງກັນແລະກັນດ້ວຍທຸກຄົນເປັນເຈົ້າຂອງແລະທຸກຢ່າງກໍເປັນຂອງກາງ. (ຄຣູຕ້ອງອະທິບາຍໃຫ້ລະອຽດ) ຂໍ້ 46-47 ພວກເຂົາຮ່ວມກັນນະມັສການທີ່ວິຫານຂອງພວກເຂົາ ແລະຮັປທານອາຫານທຸກວັນ. ທັງໄດ້ສັຣເສີນພຣະເຈົ້າ. ພຣະເຈົ້າກໍຊົງພໍພຣະທັຍ ແລະຄົນທັງປວງກໍເພິ່ງພໍໃຈນຳ.

6. ຂ້າພະເຈົ້າຮູ້ວ່າບາງຄົນຍັງບໍ່ທັນໄດ້ເວົ້າ, ຍັງຜູ້ໃດແດ່ ຂໍເຊີນ: ໜູນໃຈໃຫ້ຫ້ອງຮຽນໄດ້ປະກອບສ່ວນ.

7. ຈຸດທີ 3 ອ່ານ ຂໍ້ທີ 47 ເປັນຫຍັງພຣະເຈົ້າຈຶ່ງຕື່ມຄົນທີ່ເຊື່ອໃໝ່ໃຫ້ເຂົ້າມາທຸກໆວັນ? ຕອນນີ້ໃຫ້ຄຣູອະທິບາຍແບບປາຖະກະຖາ.

## <u>ໜູນໃຈໃນການປະຕິບັດ:</u>

8. ຂໍ້ຄິດ: ພວກເຮົາຈະກະທຳຢ່າງໃດໃນຄຣິສຕະຈັກຂອງພວກເຮົາ?
ຜູ້ທີ່ຖວາຍຕົວໃນຄຣິສຕະຈັກຂອງພວກເຮົາມີພຽງພໍບໍ່?
ເບິ່ງບ່ອນໃດຈຶ່ງຈະຮູ້ວ່າຄຣິສຕຽນແທ້ແລະຄຣິສຕຽນປອມ?
ໃຫ້ນັກຮຽນຄົນນຶ່ງອ້ອນວອນອະທິຖານປິດການຮຽນສຳລັບວັນນີ້.

*ສຈ. ດຣ. ບຸນໂຮມ ພົມມະຈັນ*

# <u>ບົດແນະນຳຄຣູສອນ</u>
# <u>ບົດຮຽນທີ 4</u>
# <u>ຕຽມປະກາດວິທີໃໝ່</u>

---

**<u>ຂໍ້ພຣະຄັມພີສຳລັບບົດຮຽນນີ້:</u>** ກິຈການ 6:1-7
**<u>ຂໍ້ພຣະຄັມທັງໝົດສຳລັບບົດຮຽນນີ້:</u>** ກິຈການ 6:1-7
**<u>ຈຸດສຳຄັນຂອງບົດຮຽນນີ້:</u>** ປະສິດທິພາບຂອງໂບດແມ່ນໂບດສາມາດຊ່ອຍຄົນໄດ້
**<u>ຄຳຖາມເພື່ອການສຳຣວດ:</u>** ເຮົາຄ້າງຄາກັບວິທີການປະກາດແບບເກົ່າແກ່.
**<u>ຈຸດປະສົງຂອງບົດຮຽນນີ້:</u>** ສຶກສາເບິ່ງວິທີການໂບດເລີ້ມແຣກສ້າງວິທານໃໝ່ໃນການປະກາດ

## <u>ບົດນຳ</u>

ເພື່ອຊອກຄົ້ນຫາ ພວກນັກສືບ, ຫ້ອງແລັບທີ່ໂຮງໝໍ, ໃນ CSI TV show ມັກຈະໃຊ້ ຝ້າຍຜັນຫູ Cotton swab (Q-Tip) ເພື່ອນຳເອົາ DNA ມາວິໄຈ. ຝ້າຍຜັນຫູນ້ອຍໆມີອຳນາດໃຫຍ່ເມື່ອນຳເອົາມູນຄວາມຈິງມາເຈຣະໄນຜ່ານເຄື່ອງ Electronic ທີ່ທັນສມັຍດັ່ງນັ້ນໃຫ້ຄຣູຕຽມເອົາຝ້າຍຜັນຫູໃຫ້ນັກຮຽນແຕ່ລະຄົນເພື່ອຈະຄົ້ນຫາຄວາມຈິງກ່ຽວກັບຄວາມເຊື່ອແລະການປະຕິບັດຂອງເຮົາ.

### 1. <u>ອ່ານ 6:1 ວຽກງານຊ່ອຍເຫລືອ</u>

ກ. ພວກສິດທະວີຂື້ນຫລາຍເປັນເຣື່ອງດີ ຫລືເວົ້າວ່າບັນຫາດີເພາະສິດມາເພີ້ມ ສະແດງວ່າໂບດນັ້ນຈະເຣີນ.

ຂ. ບັນຫາມີຢູ່ວ່າ ພວກສິດໃໝ່ເອົາເນື້ອໜັງຫລາຍກວ່າເອົາພຣະເຈົ້າ ຄືແບ່ງຊັ້ນວັນນະຣະຫວ່າງກຣີກຢິວ ແລະຢິວທີ່ເກີດໃນດິນແດນຟີລິສຕິນ.

ຄ. ສມັຍນັ້ນເຂົາຮິບໂຮມເຂົ້າປາອາຫານໄວ້ໂບດແລະແຈກຢາຍໃນວັນສຸກ ແຕ່ປາກົດວ່າບໍ່ສເມີພາບກັນ.

ງ. ພວກກຣີກຢິວໄດ້ຈົ່ມແລະຟ້ອງມາຍັງພວກສາວົກສິບສອງຄົນ.

### ໒. <u>ອ່ານ 6:໒-4 ສຶກສາແລະແກ້ໄຂ</u>

ກ. ສາວົກສິບສອງຄົນຕົກລົງກັນເອີ້ນປະຊຸມພວກລູກສິດທັງໝົດ (ພຣະຄັມພີບໍ່ໄດ້ບອກວ່າມີຈັກຄົນ)

ຂ. ສາວົກບອກພວກສິດວ່າ *ຊຶ່ງພວກເຮົາຈະປະພຣະທັມຂອງພຣະເຈົ້າໄປ ເພື່ອໄປຮັບໃຊ້ການກິນການດື່ມກໍບໍ່ສົມຄວນ* ແປວ່າການເທສນາພຣະທັມຂອງພຣະເຈົ້າເປັນສິ່ງສຳຄັນທີ່ສຸດສຳລັບພວກສາວົກ ແລະບໍ່ສົມຄວນຈະປະການເທສນາພຣະທັມແລ້ວໄປໃຊ້ເວລາກັບການກິນແລະດື່ມ (Social works).

ຄ. *ເຫດສັນນັ້ນພີ່ນ້ອງທັງຫລາຍເອີຍ, ຈົ່ງຊອກຫາເຈັດຄົນໃນຖ້າມກາງພວກທ່ານທີ່ມີຊື່ສຽງດີ ຜູ້ເຕັມໄປດ້ວຍພຣະວິນຍານບໍຣິສຸດແລະສະຕິປັນຍາ.* ຄືຊອກຜູ້ມີຄຸນນະວຸດທິສາມປະການຄື;

1. ຊື່ສຽງດີ.
2. ເຕັມໄປດ້ວຍພຣະວິນຍານບໍຣິສຸດ.
3. ເປັນຄົນມີສະຕິປັນຍາ.

ທັງສາມຢ່າງຂ້າງເທິງນີ້ເຮົາບໍ່ສາມາດເບິ່ງອອກດ້ວຍຕາເປົ່າທຸກຢ່າງ, ຖາມນັກຮຽນວ່າມີໃຜແດ່ໃນຈຳນວນພວກເຮົາມີທັງສາມຢ່າງນີ້? ຫລືຈະຮູ້ໄດ້ແນວໃດວ່າມີທັງສາມ? ບອກນັກຮຽນຈັບຝ້າຍຜັນຫູທີ່ຢາຍແລ້ວຂື້ນ

ມາແລ້ວບອກວ່າຫາກແມ່ນພວກ ນັກຄົ້ນຄວ້າ, ພວກນັກສືບ, ຫ້ອງແລບທີ່ໂຮງໝໍ, ໃນໜັງ CSI ຈະໃຊ້ຝ້າຍຝັນຫູນ້ອຍນີ້ຊອກຫາ DNA. ສລູບແລ້ວພວກສິດທັງໝົດມີໜ້າທີ່ຊອກຫາພວກສິດທີ່ມີຄຸນນະວຸດທີ່ສາມຢ່າງນີ້.

ງ. *ເຮົາຈະຕັ້ງໃຫ້ເຂົາດູແລການນີ້* ແປວ່າໃຫ້ເປັນຜູ້ຮັບຜິດຊອບການແຈກຢາຍ ຫລືຮັບໃຊ້ພະແນກສົງເຄາະ. ໂບດຂອງເຮົາຄວນຈະຮຽນເອົາແບບຢ່າງທີ່ດີນີ້ ຄືມີກັມມະການພະແນກສົງເຄາະ ເພື່ອບໍ່ໃຫ້ອາຈານສັບສົນໃນວຽກງານສົງເຄາະຈົນບໍ່ມີເວລາຕຽມບົດເທສນາ.

ຈ. *"ສ່ວນພວກສາວົກກໍຈະເອົາໃຈໃສ່ໃນການອ້ອນວອນ ແລະການສັ່ງສອນພຣະທັມ "* (ຂໍ້ 4) ສ່ວນບັນດາອາຈານກໍສົມຄວນໃນການເຂົ້າເຝົ້າພຣະເຈົ້າ ແລະຕຽມຄໍາເທສນາຢ່າງດີໃນວັນອາທິດ.

## 3. <u>ອ່ານ 6:5-7 ນໍາພາໂບດໂດຍວິທີໃໝ່</u>

ກ. *ຄົນທັງໝົດໄດ້ມີຄວາມເຫັນຊອບກັບຄໍາສເນີ* (ຂໍ້ 5ກ). ແປວ່າພວກສິດເຫັນພ້ອມກັບພວກສາວົກ.

ຂ. ລາຍຊື່ເຈັດຄົນທີ່ເລືອກມາບົ່ງບອກວ່າ ຊະເຕຟາໂນ ແມ່ນຄົນທີ່ເຕັມໄປດ້ວຍພຣະວິນຍານບໍຣິສຸດ, ຕໍ່ມາແມ່ນຟີລິບ. ເພາະທັງສອງຈະມີບົດບາດໃນຂໍ້ 8 ຮອດກິຈການບົດ 7.

ຄ. ພວກສາວົກວາງມື;

1. ຂໍອໍານາດຈາກພຣະເຈົ້າໃຫ້ນໍາພາທັງເຈັດ.
2. ມອບອໍານາດໃນພຣະນາມແຫ່ງພຣະເຢຊູຄຣິດໃນການຮັບໜ້າທີ່ຂອງຜູ້ຢູ່ຝ່າຍພຣະວິນຍານ(ຂໍ້ 6)

ງ. *ພຣະທັມຂອງພຣະເຈົ້າຈະເຣີນຂຶ້ນ* (ຂໍ້ 7). ແປວ່າການເທສນາໂດຍເອົາໃຈໃສ່ຂອງພວກສາວົກ ໂດຍການຊົງນໍາຈາກພຣະວິນຍານບໍຣິສຸດ ສາມາດເຮັດໃຫ້ຜູ້ຟັງເຂົ້າໃຈແລະຮັບເຊື່ອພ້ອມທັງປະຕິບັດພຣະທັມ.

ຈ. *ຈໍານວນພວກສິດກໍທະວີຂຶ້ນຫລາຍ* ຍ້ອນການເທສນາແລະການຮ່ວມມືກັນທໍາງານຂອງກັມມະການທັງເຈັດຄົນແຈກຢາຍເຂົ້າປາອາຫານຢ່າງຍຸດຕິທັມ.

<u>ຄໍາຖາມ:</u>

1. ທ່ານເຫັນຫຍັງໃນບົດຮຽນວັນນີ້?

2. ເຮັດແນວໃດເຮົາຈຶ່ງຈະມີຄຸນນະວຸດທີສາມປະການ (1) ຊື່ສຽງດີ. (2) ເຕັມໄປດ້ວຍພຣະວິນຍານບໍຣິສຸດ. (3) ເປັນຄົນມີສະຕິປັນຍາ.
3. ເປັນຫຍັງໂບດຫລັງນີ້ຈຶ່ງຈະເຣີນ?

4. ຕໍ່ໄປນີ້ເຮົາຄວນອາສາສມັກຮັບໃຊ້ພຣະເຈົ້າໃນໂບດແນວໃດ?

*ສຈ. ດຣ. ທຸນພັນ ວົງສຸຣິດທ໌*

<u>ບົດແນະນຳຄູສອນ</u>

<u>ບົດຮຽນທີ 5</u>

<u>ປະກາດດ້ວຍເສັງສະລະ</u>

---

<u>ຂໍ້ພຣະຄັມພີສຳລັບບົດຮຽນນີ້:</u> ກິຈການ 8:1-8, 14-17, 26-36

<u>ຂໍ້ພຣະຄັມທັງໝົດສຳລັບບົດຮຽນນີ້:</u> ກິຈການ 8:1-40

<u>ຈຸດສຳຄັນຂອງບົດຮຽນນີ້:</u> ພຣະເຈົ້າຊົງໃຊ້ໄປຮອດຊົນຊາດທີ່ປະຕິເສດເຮົາ.

<u>ຄຳຖາມເພື່ອການສຳຣວດ:</u> ພຣະເຈົ້າໄດ້ຊົງເອີ້ນເຮົາໄປຫາຜູ້ໃດແດ່?

<u>ຈຸດປະສົງຂອງບົດຮຽນນີ້:</u> ເພື່ອສຶກສາເບິ່ງວ່າພຣະເຈົ້າໄດ້ຊົງໃຊ້ພວກຜູ້ປະກາດໄປໃສແດ່?

<u>ໜ້າທີ່ສຳຄັນຂອງຄຣິສຕຽນທຸກຄົນໃຫ້ເຂົ້າໃຈວ່າ</u>

- ພຣະຄັມພີເທົ່ານັ້ນເປັນຣິດອຳນາດນຳພາທາງແຫ່ງຊີວິດໃນການເຮັດພາຣະໜ້າທີ່ການຮັບໃຊ້.
- ເພື່ອແບ່ງປັນຂ່າວປະເສີດແກ່ທຸກຄົນໂດຍບໍ່ເລືອກໜ້າ.
- ຊັກຊວນໄພ່ພົນຂອງອົງພຣະຜູ້ເປັນເຈົ້າໃຫ້ຖວາຍຕົວຮັບໃຊ້.
- ມະນຸສທຸກຄົນຖືກສ້າງໃຫ້ມີຮູບຮ່າງຄ້າຍຄືພຣະເຈົ້າ.
- ເຊື່ອຟັງແລະຮັບໃຊ້ພຣະເຢຊູໂດຍຊ່ອຍເຫລືອຜູ້ອື່ນດ້ານຮ່າງກາຍ, ຈິດວິນຍານ
- ຈັດຕຽມໄພ່ພົນຂອງພຣະເຈົ້າໃຫ້ຕຽມພ້ອມໃນການດີ.

<u>ບົດນຳ</u>

ລາງເທື່ອບັນຫາກໍຊ່ອຍໃຫ້ເຮົາເຂັ້ມແຂງ ເມື່ອເຮົາມີຄວາມອົດທົນແລະຜ່ານຜ່າມັນໄດ້ ໂດຍສເພາະຢ່າງຍິ່ງແມ່ນບັນຫາທີ່ເຮົາສາມາດແກ້ໄຂໄດ້ ກໍຖືວ່າເຮົາໄດ້ຊະນະມັນແລ້ວ, ການຖືກກົດຂີ່ຂົ່ມເຫງທີ່ພວກສິດຂອງພວກອັຄສາວົກເຮັດໃຫ້ຂ່າວປະເສີດແຜ່ຂຍາຍອອກໄປຕາມບ່ອນທີ່ພວກສິດແຕກກະຈັດກະຈາຍກັນໄປທົ່ວທຸກມຸມ ບ່ອນໃດພວກສິດໄປຢູ່ອາສັຍບ່ອນນັ້ນກໍມີການປະກາດຂ່າວປະເສີດດັ່ງໃນບົດຮຽນວັນນີ້.

1. <u>ອ່ານ 8:4-8 ຂ່າວປະເສີດຂະຫຍາຍຕົວ</u>

ກ. ສິດແຕກກະຈັດກະຈາຍ ຍ້ອນຖືກຂົ່ມເຫງ (ຂໍ້ 4).

ຂ. ອາທິບາຍຄວາມແຕກຕ່າງ ຣະຫວ່າງ ແຕກກະຈັດກະຈາຍ ແລະ ແຕກແຍກ.

ຄ. ຟີລິບຂຶ້ນໄປຊາມາເຣັຽ ພາກເໜືອກຸງເຢຣູຊາເລັມ ແລະປະກາດຢູ່ທີ່ນັ້ນ (ຂໍ້ 5)

ງ. ໄລ່ຜີ ແລະປິ່ນປົວຄົນພິການໂດຍຣິດອຳນາດຂອງພຣະເຢຊູ (ຂໍ້ 7).

ຈ. ຊາວເມືອງຍິນດີທີ່ຟີລິບມາເປັນຜູ້ຊ່ອຍ ແລະເຂົາກໍເຊື່ອໃນພຣະເຈົ້າ (ຂໍ້ 8).

ສ. ເຂົາເຊື່ອເພາະເຫັນການອັສະຈັນ, ຫາກບໍ່ມີການອັສຈັນເກີດຂຶ້ນຟີລິບຈະເປັນແນວໃດ?

2. <u>ອ່ານ 8:14-17 ພຣະເຈົ້າຊົງນຳ</u>

ກ. ຂ່າວການປະກາດຂອງຟີລິບຊ່າລືໄປຮອດກຸງເຢຣູຊາເລັມ ແລະສາວົກສິບສອງຄົນສົ່ງເປໂຕ ກັບໂຢຮັນລົງໄປຢ້ຽມຢາມ (ຂໍ້ 14).

ຂ. ຊາວຊາມາເຣັຽຮັບບັບຕິສະມາ ແຕ່ບໍ່ທັນໄດ້ຮັບພຣະວິນຍານບໍຣິສຸດ ຫລືພຣະວິນຍານຍັງບໍ່ທັນສຖິດນຳເທື່ອ (ຂໍ້ 15-16). ຈົ່ງສຶກສາພຣະທັມສາມຕອນນີ້;

1. *"ຂະນະທີ່ເປໂຕກຳລັງກ່າວດັ່ງນີ້ຢູ່ພຣະວິນຍານບໍຣິສຸດໄດ້ສເດັດລົງມາເທິງຄົນທັງປວງທີ່ກຳລັງຟັງພຣະທັມນັ້ນ "* (ກິຈການ 10:44). ແປວ່າໃນຂະນະທີ່ເປໂຕກຳລັງເທສນາຢູ່ນັ້ນພວກຜູ້ຟັງພຣະທັມກໍໄດ້ຮັບພຣະວິນຍານບໍຣິສຸດ ແລະຕໍ່ມາເປໂຕຈຶ່ງສັ່ງເຂົາໃຫ້ບັບຕິສະມາໃນນາມຂອງພຣະເຢຊູຄຣິດ. (ກຈກ 10:48)

2. *"ຈຶ່ງຖາມເຂົາວ່າ ເມື່ອທ່ານທັງຫລາຍເຊື່ອນັ້ນ ພວກທ່ານໄດ້ຮັບພຣະວິນຍານບໍຣິສຸດຫລືບໍ່? ເຂົາຕອບວ່າບໍ່ (ກິຈການ* 19: 2). ໂປໂລຈຶ່ງຊັກຖາມຕໍ່ໄປໄດ້ຄວາມວ່າ ເຂົາຮັບບັບຕິສະມາຈາກໂຢຮັນ ແຕ່ໃຫ້ບອກວາງໃຈເຊື່ອພຣະເຢຊູ ຜູ້ທີ່ມາຕາມຫລັງ ແຕ່ບໍ່ທັນໄດ້ຮັບພຣະວິນຍານບໍຣິສຸດຈົນກວ່າໂປໂລວາງມືໃສ່ ເຂົາ(ກ 19:6).

3. *"ເມື່ອໄດ້ຍິນພຣະທັມອັນສັດຈິງຄືຂ່າວປະເສີດເຣື່ອງຂອງຄວາມພົ້ນຂອງພວກທ່ານແລະໄດ້ວາງໃຈໃນພຣະອົງກໍຊົງໄດ້ປະທັບຕຣາໝາຍໄວ້ດ້ວຍພຣະວິນຍານບໍຣິສຸດທີ່ຊົງສັນຍາໄວ້ນັ້ນ "*(ເອເຟໂຊ 1: 13).

ຄ. ສລຸບ 1 ເຖິງ 3 ເຂົາບັບຕິສະມາໃນນາມພຣະເຢຊູອາຈເປັນເພາະວ່າເຂົາເຫັນໝາຍສຳຄັນຫລືເຫັນການອັສຈັນເທົ່ານັ້ນ ແຕ່ເມື່ອບໍ່ວາງໃຈເຊື່ອໃນພຣະເຢຊູຈຶ່ງບໍ່ທັນໄດ້ຮັບພຣະວິນຍານບໍຣິສຸດ.

ງ. ເປໂຕກັບໂຢຮັນວາງມືໃສ່ເຂົາແລ້ວຈຶ່ງຮັບພຣະວິນຍານບໍຣິສຸດ ບໍ່ໝາຍຄວາມວ່າມືທ່ານທັງສອງມີພຣະວິນຍານບໍຣິສຸດໃນອຸ້ງມື, ການວາງມືເປັນພິທີອັນນຶ່ງຕາມຄວາມເຊື່ອ ສຳລັບພຣະວິນຍານສະເດັດມາຢູ່ນຳຜູ້ນັ້ນຫລືບໍ່ແມ່ນຂຶ້ນກັບຄວາມເຊື່ອຂອງຜູ້ກ່າວ ແລະພຣະວິນາຍານບໍຣິສຸດເທົ່ານັ້ນ. (ຂໍ້ 17).

## 3. <u>ອ່ານ 8: 26-37 ຊົງຈັດຕຽມ</u>

ກ. ເປໂຕກັບໂຢຮັນກັບຄືນເຢຣູຊາເລັມ ສ່ວນຟີລິບພຣະເຈົ້າໄດ້ໃຊ້ໄປພາກໃຕ້, ໝາຍຄວາມວ່າທີ່ຊາມາເຣັຽມີຄົນສາມາດເທສນາແລະສອນກັນໄດ້ແລ້ວ (ຂໍ້ 26).

ຂ. ຟີລິບເຫັນນິມິດທີ່ເທວະດາຂອງອົງພຣະຜູ້ເປັນເຈົ້າລົງມາບອກ (ຂໍ້ 27).

ຄ. ຟີລິບພົບກັບຂ້າຣາຊການເອທິໂອເປັຽ (ຂໍ້ 28).

ງ. ພຣະເຈົ້າຊົງຈັດຕຽມຣົດມ້າໄວ້ຖ້າຟີລິບ(ຂໍ້ 29).

ຈ. ຟີລິບເຮັດຕາມຄຳສັ່ງພຣະເຈົ້າ ແລະທັກທາຍສົນທະນາກັບຂ້າຣາຊການເອທິໂອເປັຽ (ຂໍ້ 30).

ສ. ຟີລິບຖືກເຊີນໃຫ້ນັ່ງຣົດໄປນຳ (ຂໍ້ 31).

ຊ. ຟີລິບເລີ້ມຕົ້ນອາທິບາຍພຣະທັມເອຊາຢາທີ່ຂ້າຣາຊການເອທິໂອເປັຽກຳລັງອ່ານ (32-33).

ຍ. ສອງຄົນສົນທະນາເຣື່ອງພຣະທັມ ແລະຟີລິບປະກາດຂ່າວປະເສີດຕໍ່ຂ້າຣາຊການເອທິໂອເປັຽ (ຂໍ້ 34-35)

ດ. ຂ້າຣາຊການຮັບເຊື່ອແລະຂໍຮັບບັບຕິສະມາ ດ້ວຍຄວາມເຊື່ອແລະເຂົ້າໃຈ (ຂໍ້ 36).

*ສຈ. ດຣ. ທຸນພັນ ວົງສຸຣິດທ໌*

# ຄຳແນະນຳສຳລັບຄຣູສອນ
# ບົດຮຽນທີ 6
# ຢ່າລືມຜູ້ຕ່ຳຕ້ອຍ

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** ກິຈການ 9:10-28
**ຂໍ້ພຣະຄັມພີສຳລັບເບື້ອງຫຼັງ:** ກິຈການ 9: 1-31
**ຈຸດສຳຄັນຂອງບົດຮຽນນີ້:** ຄຣິຕະຈັກທີ່ຕິດຕາມພຣະຄຣິດຈະຕ້ອງຫາທາງໃຫ້ທຸກຄົນສາມາດເຂົ້າຮ່ວມໃນກຸ່ມໄດ້.
**ຄຳຖາມເພື່ອການສຳຣວດ:** ຄຣິສຕະຈັກຂອງທ່ານສາມາດຮັບຄົນ "ນອກ" ໄດ້ດີເທົ່າໃດ?
**ຈຸດປະສົງຂອງບົດຮຽນນີ້:** ເພື່ອຮູ້ວິທີວ່າໂຊໂລຜູ້ເຄີຍຂົ່ມເຫັງຄຣິສຕຽນ ສາມາດເຂົ້າຢູ່ໃນກຸ່ມຜູ້ເຊື່ອໄດ້ຢ່າງໃດ ແລະຊອກວິທີທີ່ຄຣິສຕະຈັກຂອງທ່ານຈະສາມາດໃຫ້ທຸກຄົນສາມາດເຂົ້າຮ່ວມໃນກຸ່ມຂອງທ່ານໄດ້.

## ແຜນສຳລັບການສອນ

### ນຳເຣື່ອງເຂົ້າສູ່ຊີວິດຈິງ (ໃຊ້ເວລາ 5 ນາທີ)

1. ກ່ອນມື້ຈະຮຽນບົດຮຽນນີ້ ໃຫ້ເລືອກນັກຮຽນຜູ້ນຶ່ງ ແລະຂໍຮ້ອງໃຫ້ລາວຕຽມຄຳພຍານເຣື່ອງການກັບໃຈເຊື່ອຂອງຕົນ ແລະໃຫ້ໃຊ້ເວລາປະມານ 3 ນາທີ. ເລີ້ມບົດຮຽນດ້ວຍຄຳພຍານ ແລະສິ່ງທີ່ເກີດຂຶ້ນໃນຊີວິດຫລັງຈາກມາເຊື່ອ. ບອກນັກຮຽນວ່າບົດຮຽນມື້ນີ້ ແມ່ນເຣື່ອງການກັບໃຈເຊື່ອຂອງ ໂປໂລ (ໂຊໂລ) ແລະສິ່ງທີ່ເກີດຂຶ້ນຫລັງຈາກນັ້ນ.

2. ຖາມ: ແມ່ນຫຍັງຈະເກີດຂຶ້ນກັບໂຊໂລ ຖ້າທຸກຄົນບໍ່ເຊື່ອເຣື່ອງການກັບໃຈຂອງທ່ານ ແລະບໍ່ຍອມຮັບທ່ານເຂົ້າຮ່ວມໃນກຸ່ມຄຣິສຕະຈັກ?

### ນຳພາການສຶກສາພຣະທັມ (ໃຊ້ເວລາ 30 ນາທີ)

3. ຕຽມໂປສເຕີໄວ້ນຶ່ງແຜ່ນ ກ່ອນມື້ຈະຮຽນບົດຮຽນນີ້ ແລະຂຽນຫົວຂໍ້ຂອງບົດຮຽນໃສ່:
   (1) ການຍອມຮັບຄົນອື່ນຈະຕ້ອງຮູ້ສັງເກດ (9:13)
   (2) ການຍອມຮັບຄົນອື່ນຈະຕ້ອງມີການສ່ຽງພັຍ (9: 10-12)
   (3) ການຍອມຮັບຄົນອື່ນຈະຕ້ອງມີການເຊື່ອຟັງ (9:14-17)
   (4) ການຍອມຮັບຄົນອື່ນຈະຕ້ອງມີການໝູນໃຈ (9:18-28)

4. ໃຫ້ຄົນນຶ່ງອ່ານ ກິຈການ 9:10-12. ຊີ້ໃຫ້ທຸກເຫັນວ່າກຸງດາມາເຊຢູ່ໃສ (ຕຽມແຜນທີ່ໄວ້ລ່ວງໜ້າ). ດາມາເຊຕັ້ງຢູ່ທາງເໜືອຂອງທະເລຄາລີເລ ປະມານ 60 ໄມ. ໃຊ້ຂໍ້ມູນຈາກບົດຮຽນຊ່ວຍ. ຊ່ວຍນັກຮຽນໃຫ້ເຂົ້າໃຈຄວາມຮູ້ສຶກຂອງອານາເນັຽກ່ຽວກັບໂຊໂລ. ທ່ານຄິດວ່າເປັນການລຳບາກບໍ່ທີ່ອານາເນັຽຈະໄປຢ້ຽມໂຊໂລ?

5. ໃຫ້ຄົນນຶ່ງອ່ານ ກິຈການ 9:13. ໃຊ້ຄຳອະທິບາຍໃນບົດຮຽນເພື່ອສົນທະນາໂດຍສະເພາະເຣື່ອງການແຕ່ງຕັ້ງຜູ້ໃດຜູ້ນຶ່ງໃຫ້ເປັນຜູ້ນຳ. ສລູບເຣື່ອງ "ການຍອມຮັບຄົນອື່ນຈະຕ້ອງຮູ້ສັງເກດ" ແລະເຣື່ອງໂຊໂລປ່ຽນຖານະຈາກຜູ້ຂົ່ມ

ເທວຄຣິສຕຽນກາຍມາເປັນໂປໂລອັຄສາວົກ.

6. ໃຫ້ຜູ້ນຶ່ງອ່ານກິຈການ 9:14-17. ທ່ານອາດຈະຂໍໃຫ້ນັກຮຽນຜູ້ນຶ່ງສຶກສາບົດຮຽນຕອນນີ້ໄວ້ລ່ວງໜ້າ (ການຍອມຮັບຄົນອື່ນຈະຕ້ອງມີການເຊື່ອຟັງ) ແລ້ວເລົ່າໃຫ້ທຸກຄົນຟັງເຣື່ອງການເຊື່ອຟັງໂດຍໃຊ້ເວລາ 2 ນາທີ.

7. ໃຫ້ຜູ້ນຶ່ງອ່ານ ກິຈການ 9:18-28. ເລົ່າເຣື່ອງການຍອມຮັບແລະການໜູນໃນທີ່ອານາເນັຽໄດ້ເຮັດກັບໂຊໂລ. ທ່ານອາດຈະອະທິບາຍເຣື່ອງຄວາມສຳຄັນຂອງການບັບຕິສະມາ. ອ່ານຂໍ້ 27 ອີກເທື່ອນຶ່ງແລະເນັ້ນວິທີທີ່ບາຣະນາບານຳພາຄຣິສຕຽນທີ່ກຸງເຢຣູຊາເລັມໃຫ້ຍອມຮັບໂປໂລ. ສລຸບພາກສຸດທ້າຍຂອງບົດຮຽນໃນຫົວຂໍ້ "ການຍອມຮັບຄົນອື່ນຈະຕ້ອງມີການໜູນໃຈ" ໂດຍໃຊ້ບົດຮຽນຊ່ວຍ.

## <u>ນຳບົດຮຽນໄປໃຊ້ໃນຊີວິດ (ໃຊ້ເວລາ 15 ນາທີ)</u>

8. ອ່ານ ແລະຕອບຄຳຖາມ ໃນບົດຮຽນ; ໃຊ້ເວລາສົນທະນາ ແລະທຳຄວາມເຂົ້າໃຈ.

9. ນຳພານັກຮຽນໃນການວາງແຜນແລະຊອກຫາວິທີທີ່ຈະໃຫ້ "ຄົນນອກ" ໄດ້ເຂົ້າຮ່ວມໃນກຸ່ມຫ້ອງຮຽນ ຫລືກຸ່ມຄຣິສຕະຈັກ.

10. ຊັກຊວນນັກຮຽນໃຫ້ເຮັດໃນສິ່ງຕໍ່ໄປນີ້:
    (1) ຂຽນຊື່ບຸກຄົນທີ່ເຂົາເຈົ້າຄິດວ່າຈະບໍ່ຍອມເປັນຄຣິສຕຽນໃສ່ໃນກະດາດ ແລະອະທິຖານເພື່ອບຸກຄົນເຫລົ່ານັ້ນ ໆ.
    (2) ຊອກຫາໂອກາດເພື່ອໜູນໃຈບຸກຄົນທີ່ມີຊື່ຢູ່ໃນກະດາດແຜ່ນນັ້ນ.
    (3) ຊອກວິທີທີ່ຈະເປັນມິດກັບບຸກຄົນທີ່ຕໍ່ຕ້ານຄຣິສຕຽນ.

ອະທິຖານປິດ.

*ສຈ. ດຣ. ສິດນີ ຄານ*

# ຄຳແນະນຳສຳລັບຄຣູສອນ

# ບົດຮຽນ 7

# ທຳລາຍກຳແພງ

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** ກິຈການ 11: 1-18

**ຂໍ້ພຣະຄັມພີສຳລັບເບື້ອງຫຼັງ:** ກິຈການ 10:1--11:18

**ຈຸດສຳຄັນຂອງບົດຮຽນນີ້:** ຄຣິຕະຈັກເພື່ອການປະກາດຕິດຕາມການນຳພາຂອງພຣະເຈົ້າ ເວລາພຣະອົງຊົງທ້າທາຍ ພວກເຂົາໃຫ້ທຳລາຍກຳແພງທີ່ກີດກັ້ນພວກເຂົາເພື່ອຈະໄດ້ມີສ່ວນໃນພັນທະກິດຂອງພຣະເຈົ້າເຣື່ອງການອອກໄປຫາທຸກໆຄົນຢ່າງເຕັມສ່ວນ.

**ຄຳຖາມເພື່ອການສຳຣວດ:** ມີສິ່ງໃດແດ່ທີ່ຂັດຂວາງຄຣິສຕະຈັກຂອງທ່ານບໍ່ໃຫ້ໄດ້ເຮັດທຸກຢ່າງທີ່ພຣະເຈົ້າຊົງຕ້ອງການໃຫ້ເຮັດ?

**ຈຸດປະສົງຂອງບົດຮຽນນີ້:** ເພື່ອຈະຮູ້ວ່າມີກຳແພງໃດແດ່ທີ່ພຣະເຈົ້າກຳລັງທ້າທາຍພວກເຮົາໃຫ້ທຳລາຍເສັຍເພື່ອພວກເຮົາຈະໄດ້ມີສ່ວນໃນພັນທະກິດຂອງພຣະອົງເຈົ້າຢ່າງເຕັມສ່ວນ?

## ແຜນສຳລັບການສອນ

### ນຳເຣື່ອງເຂົ້າສູ່ຊີວິດຈິງ (ໃຊ້ເວລາ 5 ນາທີ)

1. ອ່ານ "ຈຸດສຳຄັນຂອງບົດຮຽນນີ້" ຫລືຂຽນໃສ່ໂປສເຕີ້ແລ້ວຕິດໄວ້ຂ້າງໜ້າກ່ອນເລີ່ມບົດຮຽນ. ຖາມ: ມີປະເພນີຫລືອຸປສັກຫຍັງແດ່ຢູ່ໃນຄຣິສຕະຈັກທີ່ເປັນສິ່ງກີດກັ້ນບໍ່ໃຫ້ອອກໄປປະກາດຂ່າວປະເສີດກັບຄົນທັງຫລາຍ?

2. ເຊີນທຸກຄົນໃຫ້ອ່ານຄຳນຳໃນບົດຮຽນຢ່າງງຽບໆ. ຂໍໃຫ້ຄົນນຶ່ງສລຸບໃຫ້ທຸກຄົນຟັງ. ໃຫ້ຜູ້ນຶ່ງທີ່ມີປະສົບການໃນທຳນອງດຽວກັນນີ້ ເປັນພຍານ. ຖາມ: ພຣະເຈົ້າໄດ້ຊົງເປີດໂອກາດໃຫ້ທ່ານບໍ່ໃນລະຍະບໍ່ນານມານີ້? ຖ້າບໍ່, ເປັນຫຍັງ?

### ນຳພາການສຶກສາພຣະທັມ (ໃຊ້ເວລາ 30 ນາທີ)

3. ຂຽນຫົວຂໍ້ບົດຮຽນໃສ່ກະດານ (ທ່ານຄວນຈະຕຽມໄວ້ລ່ວງໜ້າ). ຊີ້ໃສ່ຫົວຂໍ້ເຫລົ່ານີ້ເວລາສອນບົດຮຽນແຕ່ລະພາກ.

4. ໃຫ້ຜູ້ນຶ່ງອ່ານໃຫ້ທຸກຄົນຟັງ ແລະຊັກຊວນທຸກຄົນໃຫ້ເບິ່ງພຣະຄັມພີໄປພ້ອມກັນ. ໃຫ້ຕັ້ງໃຈຟັງຄຳເວົ້າຂອງເປໂຕແລະເບິ່ງວ່າເປັນຫຍັງທ່ານຈຶ່ງເວົ້າຢ່າງນັ້ນ.

5. ຖາມ: ມີສິ່ງແວດລ້ອມພາຍນອກແນວໃດແດ່ ທີ່ຫລາຍຄົນມັກຈະເວົ້າເຖິງວ່າເປັນອຸປສັກທີ່ເຮັດໃຫ້ເຂົາເຈົ້າບໍ່ສາມາດມີສ່ວນໃນເຣື່ອງປະກາດ? ພາທຸກຄົນເບິ່ງ "ກຳແພງອັນຍິ່ງໃຫຍ່ແມ່ນຢູ່ໃນພວກເຮົາ." ເນັ້ນວ່າພວກຄຣິສຕຽນໃນສມັຍທຳອິດກໍມີບັນຫາເໝືອນກັນ ແຕ່ພຣະເຈົ້າໄດ້ພາພວກເຂົາຂ້າມກຳແພງເຫລົ່ານັ້ນ. ສລູບບົດຮຽນພາກນີ້.

6. ເບິ່ງຫົວຂໍ້ "ປະເພນີເປັນບໍ່ເກີດຂອງອຸປສັກສຳລັບພັນທະກິດ." ຖາມ: ປະເພນີເປັນເຣື່ອງດີບໍ່? ປະເພນີສາມາດເປັນອຸປສັກບໍ່? ໃຫ້ເວລາຕອບ. ສລຸບບົດຮຽນພາກນີ້. ໃຫ້ຄົນອ່ານພຣະທັມທີ່ກ່ຽວກັບການສົນທະນາ.

7. ເວົ້າເຣື່ອງວ່າການລຳອຽງຫລືການພິພາກສາຄົນອື່ນ ສາມາດເປັນອຸປສັກສຳລັບການປະກາດ. ອະທິບາຍວ່າໂກເນລີໂອແມ່ນໃຜ? ອະທິບາຍເຣື່ອງເປໂຕສາມາດເອົາຊະນະການລຳອຽງ ຫລືການພິພາກສາຄົນອື່ນ ເພື່ອຈະໄປບ້ານຂອງໂກເນລີໂອ. ອ່ານກິຈການ 10:28 ໃຫ້ທຸກຄົນຟັງ. ຖາມ: ທ່ານໄດ້ເຫັນການລຳອຽງຢູ່ໃສໃນລະຍະບໍ່ນານມານີ້? ໃຫ້ເວລາສົນທະນາ.

8. ເບິ່ງຫົວຂໍ້ "ຂາດການອ້ອນວອນເປັນບໍ່ເກີດຂອງອຸປສັກສຳລັບພັນທະກິດ." ຖາມ: ຖ້າເປໂຕແລະໂກເນລີໂອບໍ່ໄດ້ໄຫວ້ວອນແມ່ນຫຍັງແດ່ຈະບໍ່ເກີດຂຶ້ນ? ການອ້ອນວອນສຳຄັນແນວໃດກັບການຮູ້ພຣະປະສົງຂອງພຣະເຈົ້າສຳລັບຊີວິດຂອງພວກເຮົາ?

9. ເບິ່ງຫົວຂໍ້ "ການບໍ່ເຫັນພຣະນິມິດເປັນບໍ່ເກີດຂອງອຸປສັກສຳລັບພັນທະກິດ." ອະທິບາຍນິມິດຂອງເປໂຕໂດຍໃຊ້ພຣະທັມ ແລະບົດຮຽນຊ່ວຍ.

10. ເບິ່ງຫົວຂໍ້ "ແຜນການຂອງພວກເຮົາເປັນບໍ່ເກີດຂອງອຸປສັກສຳລັບພັນທະກິດ." ຖາມ: ແຜນການສ່ວນຕົວຂອງເຮົາສາມາດເປັນອຸປສັກບໍ່ໃຫ້ພຣະເຈົ້າໄດ້ຊົງໃຊ້ພວກເຮົາບໍ່? ທ່ານຄິດວ່ານິມິດຂອງພຣະເຈົ້າສຳລັບເປໂຕເຮັດໃຫ້ລາວຕ້ອງເສັຽແຜນທີ່ວາງໄວ້ສຳລັບມື້ຕໍ່ໄປບໍ່?

11. ຊີ້ໃສ່ຫົວຂໍ້ "ການບໍ່ເຊື່ອຟັງເປັນບໍ່ເກີດຂອງອຸປສັກສຳລັບພັນທະກິດ." ໃຊ້ບົດຮຽນ ແລະພຣະທັມສຳລັບພາກນີ້ເພື່ອອະທິບາຍ.

## <u>ນຳບົດຮຽນໄປໃຊ້ໃນຊີວິດ (ໃຊ້ເວລາ 15 ນາທີ)</u>

12. ຖາມຄຳຖາມທີ 3 ໃນບົດຮຽນນີ້. ຟັງຄຳເຫັນຂອງນັກຮຽນ. ຖາມຄຳຖາມທີ 1 ແລະໃຫ້ເວລາຕອບ.

13. ໃຊ້ຄຳຖາມຕໍ່ໄປນີ້ເພື່ອການສົນທະນາ:
    ກ. ທ່ານມີອຸປສັກແນວໃດໃນຊີວິດທີ່ກີດກັ້ນບໍ່ໃຫ້ທ່ານປະກາດຂ່າວປະເສີດກັບຄົນອື່ນໆ?
    ຂ. ມີຫຍັງແດ່ທີ່ທ່ານສາມາດເຮັດໄດ້ໃນອາທິດນີ້ເພື່ອເອົາອຸປສັກນັ້ນອອກ ແລ້ວເຮັດຕາມນິມິດໝາຍທີ່ພຣະເຈົ້າຊົງມອບໃຫ້ສຳລັບຊີວິດ ຢ່າງເກີດຜົນ ແລະເຊື່ອຟັງ?
    ຄ. ແມ່ນຫຍັງຄືອຸປສັກສຳລັບຄຣິສຕະຈັກຂອງທ່ານ? ທ່ານຈະເຮັດແນວໃດຈຶ່ງຈະທຳລາຍມັນໄດ້?

*ສຈ. ດຣ. ທຸມພັນ ວົງສຸຣິດທ໌*

<u>**ຄຳແນະນຳສຳລັບຄຣູສອນ**</u>

<u>**ບົດຮຽນທີ 8**</u>

<u>**ປະກາດກັບທຸກຄົນ**</u>

---

<u>**ຂໍ້ພຣະຄັມພີສຳລັບບົດຮຽນນີ້:**</u> ກິຈການ 11: 19-26

<u>**ຂໍ້ພຣະຄັມພີສຳລັບເບື້ອງຫຼັງ:**</u> ກິຈການ 11:19-26

<u>**ຈຸດສຳຄັນຂອງບົດຮຽນນີ້:**</u> ຄຣິສຕະຈັກເພື່ອການປະກາດຊອກຫາວິທີທາງທີ່ຈະປະກາດກັບທຸກຄົນ.

<u>**ຄຳຖາມເພື່ອການສຳຣວດ:**</u> ຖ້າຍັງບໍ່ມີຄຳວ່າ "ຄຣິສຕຽນ," ຄົນທັງຫລາຍຈະເອີ້ນຄຣິສຕະຈັກຂອງທ່ານວ່າແນວໃດ?

<u>**ຈຸດປະສົງຂອງບົດຮຽນນີ້:**</u> ເພື່ອຊອກຫາວິທີທີ່ຄຣິສຕະຈັກຂອງພວກເຮົາຈະສາມາດອອກປະກາດກັບຄົນທັງຫລາຍໃຫ້ໄດ້ດີກວ່ານີ້.

<u>**ແຜນສຳລັບການສອນ**</u>

<u>**ນຳເຣື່ອງເຂົ້າສູ່ຊີວິດຈິງ (ໃຊ້ເວລາ 5 ນາທີ)**</u>

1. ຂຽນ "ຈຸດສຳຄັນຂອງບົດຮຽນນີ້" ໃສ່ກະດານ: "ຄຣິສຕະຈັກເພື່ອການປະກາດຊອກຫາວິທີທາງທີ່ຈະປະກາດກັບທຸກຄົນ." ຖາມ: ທ່ານຄິດວ່າຄຣິສຕະຈັກຂອງພວກເຮົາເປັນແນວໃດເຣື່ອງການປະກາດຂ່າວປະເສີດກັບທຸກຄົນ? ໃຊ້ເວລາສົນທະນາ.

<u>**ນຳພາການສຶກສາພຣະທັມ (ໃຊ້ເວລາ 30 ນາທີ)**</u>

2. ສລຸບຄຳນຳສຳລັບບົດຮຽນນີ້ໃຫ້ທຸກຄົນຟັງ. ເບິ່ງແຜນທີ່ແລະຊີ້ໃຫ້ນັກຮຽນເຫັນວ່າເມືອງຟອຍນີເກ, ເກາະກຸບໂຣ, ເມືອງອັນຕີໂອເຂັຽ ແລະເມືອງກີເຣເນ ຢູ່ໃສ (ທ່ານອາດຈະຕຽມແຜນທີ່ແບບຕິດຝາ ຫລືເບິ່ງແຜນທີ່ໃນພຣະຄັມພີ).

3. ໃຫ້ຄົນນຶ່ງອ່ານກິຈການ 11:19-26 ແລະໃຫ້ຄົນອື່ນໆເບິ່ງຕາມໄປ. ບອກໃຫ້ທຸກຄົນຟັງເບິ່ງວ່າເຫດການເກີດຂຶ້ນຢູ່ໃສ, ມີຫຍັງເກີດຂຶ້ນ, ແລະມີຫຍັງພິເສດສຳລັບເຫດການນີ້.

4. ເບິ່ງຫົວຂໍ້ສຳລັບພາກນີ້. (ກະຣຸນາເບິ່ງບາດກ້າວທີ 5-6, 8-11)

5. ເບິ່ງຫົວເຣື່ອງ "ຖ້າຈະປະກາດກັບຄົນທັງຫລາຍພວກເຮົາຈະຕ້ອງເວົ້າເຣື່ອງຂ່າວປະເສີດທຸກຄົນ." ໃນພຣະທັມຂໍ້ 19, ສັງເກດເບິ່ງວ່າ ພວກເຂົາເຈົ້າບໍ່ໄດ້ເວົ້າກັບຄົນອື່ນ ນອກຈາກຊາວຢິວຝ່າຍດຽວ. ຖາມ: ແມ່ນໃຜເປັນຄົນເລີ່ມເວົ້າ ກັບຊາວກຣີກ? ເປັນຫຍັງເຣື່ອງນີ້ຈຶ່ງສຳຄັນ? ທ່ານຢາກເຊີນໃຜແດ່ມາໂບດໃນມື້ນີ້? (ຄົນທີ່ຄືກັບເຮົາ)

6. ເບິ່ງຫົວຂໍ້, "ຖ້າຈະປະກາດກັບຄົນທັງຫລາຍພວກເຮົາຈະຕ້ອງເປັນຄົນທີ່ໄດ້ປ່ຽນແປງຊີວິດແລ້ວ." ເນັ້ນຂໍ້ 11:23 ແລະສົນທະນາກັນ. ຖາມ: ເປັນຫຍັງການຕັ້ງໃຈໝັ້ນຄົງຕິດສນິດຢູ່ກັບພຣະຜູ້ເປັນເຈົ້າຈຶ່ງສຳຄັນ? ການເນັ້ນເຣື່ອງການປະກາດພຣະທັມໃນມື້ນີ້ສຳຄັນຢ່າງໃດ?

7. ກ່ອນການໃຊ້ບົດຮຽນນີ້ ໃຫ້ທ່ານຕຽມຄົນຜູ້ນຶ່ງໄວ້ລ່ວງໜ້າເພື່ອຈະແບ່ງປັນເຣື່ອງການເປັນຄຣິສຕຽນ. ການເປັນຄຣິສຕຽນມີຄວາມໝາຍແນວໃດ? ຄຣິສຕຽນຈະຕ້ອງດຳເນີນຊີວິດຢ່າງໃດ? ໃຫ້ເວລາ 3 ນາທີ.

8. ເບິ່ງຫົວຂໍ້ "ຖ້າຈະປະກາດກັບຄົນທັງຫລາຍພວກເຮົາຈະຕ້ອງຊອກຫາບ່ອນເກັບກ່ຽວ." ຖາມ: ເປັນຫຍັງຄຣິສຕະຈັກເຢຣູຊາເລັມຈຶ່ງສົ່ງບາຣະນາບາໄປເມືອງອັນຕິໂອເຊັຽ? ສົນທະນາເຣື່ອງຄວາມສຳຄັນຂອງການເກັບກ່ຽວໂດຍໃຊ້ບົດຮຽນຊ່ວຍ.

9. ເບິ່ງຫົວຂໍ້ "ຖ້າຈະປະກາດກັບຄົນທັງຫລາຍພວກເຮົາຈະຕ້ອງໝູນໃຈການເກັບກ່ຽວ." ເລົ່າເຣື່ອງວ່າບາຣະນາບາແມ່ນໃຜ ແລະທ່ານມີສ່ວນຫຍັງກັບຄຣິສຕະຈັກອັນຕິໂອເຊັຽ. ອ່ານ 11:23 ແລະ ຖາມ: ເວລາບາຣະນາບາມາເຖິງເມືອງນີ້ ທ່ານໄດ້ເຮັດຫຍັງແດ່? (ໝູນໃຈຜູ້ເຊື່ອ)

10. ເບິ່ງຫົວຂໍ້ "ຖ້າຈະປະກາດກັບຄົນທັງຫລາຍພວກເຮົາຈະຕ້ອງພົວພັນຄົນອື່ນໆ." ເບິ່ງເມືອງຕາໂຊຢູ່ໃນແຜນທີ່. ຖາມ: ເປັນຫຍັງບາຣະນາບາຈຶ່ງເລືອກໂຊໂລໃຫ້ມາຊ່ວຍ? (ໂຊໂລຊຳນານເຣື່ອງສາສນາຢູດາຍ, ທ່ານປາກພາສາກຣີກ, ທ່ານຊ່ຽວຊານໃນພຣະທັມ, ພຣະເຈົ້າໄດ້ບອກກັບອານາເນັຽວ່າ ໂຊໂລເປັນເຄື່ອງມືຮັບໃຊ້ຂອງພຣະເຈົ້າ)

11. ເບິ່ງຫົວຂໍ້ "ຖ້າຈະປະກາດກັບຄົນທັງຫລາຍພວກເຮົາຈະຕ້ອງມີສ່ວນໃນການເກັບກ່ຽວ." ອ່ານ 11:26. ຖາມ: ບາຣະນາບາແລະໂຊໂລໄດ້ເຮັດຫຍັງຢູ່ທີ່ເມືອງອັນຕິໂອເຊັຽ?

<u>ນຳບົດຮຽນໄປໃຊ້ໃນຊີວິດ (ໃຊ້ເວລາ 15 ນາທີ)</u>

12. ສົນທະນາບາດກ້າວທີ 11 ຕໍ່ ໂດຍຖາມວ່າ, ຄຣິສຕະຈັກຂອງທ່ານຈະເຮັດແນວໃດແດ່ ເພື່ອຈະມີສ່ວນໃນການອອກໄປປະກາດກັບຄົນອື່ນໆ?

13. ເຊີນແຕ່ລະຄົນໃຫ້ຄະແນນວ່າຄຣິສຕະຈັກຂອງທ່ານເຮັດວຽກເຣື່ອງປະກາດໄດ້ດີປານໃດ (ຄະແນນ 1 ເຖິງ 10, 10 ແມ່ນດີເລີດ). ຂໍຄຳເຫັນວ່າເຮັດແນວໃດການປະກາດຈຶ່ງຈະໄດ້ຜົນດີຂຶ້ນ. ຖາມ: ທ່ານຄິດວ່າການປະກາດຂອງຕົນເອງຄວນຈະໄດ້ຄະແນນຫລາຍປານໃດ ແຕ່ 1 ເຖິງ 10?

14. ສົນທະນາຄຳຖາມທີ 4 ໃນທ້າຍຂອງບົດຮຽນ. ຖາມ: ມີໃຜແດ່ທີ່ທ່ານຮູ້ວ່າບຸກຄົນຜູ້ນັ້ນສົມຄວນຈະພົວພັນກັບວຽກງານທີ່ພຣະເຈົ້າກຳລັງທຳຢູ່ໃນຄຣິສຕະຈັກຂອງພວກທ່ານ?

15. ໃຫ້ຜູ້ນຶ່ງອາສາສມັກ ອ້ອນວອນເພື່ອປິດການຮຽນ.

*ສຈ. ດຣ. ສີດນີ ຄານ*

# ຄຳແນະນຳສຳລັບຄຣູສອນ
# ບົດຮຽນທີ 9
# ສ່ຽງພັຍເພື່ອເຮັດຕາມການຊົງນຳ

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** ກິຈການ 13:1-6, 13-16,42-52; 14:19-22

**ຂໍ້ພຣະຄັມພີສຳລັບເບື້ອງຫຼັງ:** ກິຈການ 13---14

**ຈຸດສຳຄັນຂອງບົດຮຽນນີ້:** ຕິດຕາມພຣະເຈົ້າອາດຈະໄດ້ເຮັດບາງຢ່າງ ເບິ່ງຄ້າຍກັບວ່າເປັນການສ່ຽງພັຍ.

**ຄຳຖາມເພື່ອການສຳຣວດ:** ທ່ານ ຫລືຄຣິສຕະຈັກຂອງທ່ານເຄີຍເຮັດຫຍັງແດ່ທີ່ເບິ່ງຄ້າຍກັບວ່າເປັນການສ່ຽງເພື່ອຈະຕິດຕາມການຊົງນຳຂອງພຣະເຈົ້າ?

**ຈຸດປະສົງຂອງບົດຮຽນນີ້:** ເພື່ອຮູ້ວ່າມີຫຍັງແດ່ທີ່ຂ້າພະເຈົ້າແລະຄຣິສຕະຈັກສາມາດຮຽນຮູ້ຈາກສິ່ງທີ່ຄຣິສຕຽນໃນສມັຍທຳອິດໄດ້ເຮັດເພື່ອຕິດຕາມການຊົງນຳ ຊຶ່ງເບິ່ງແລ້ວຄືການສ່ຽງພັຍ.

## ແຜນສຳລັບການສອນ

### ນຳເຣື່ອງເຂົ້າສູ່ຊີວິດຈິງ (ໃຊ້ເວລາ 5 ນາທີ)

1. ແບ່ງກະດານ ຫລືໂປສເຕີ້ເປັນສອງພາກສ່ວນ. ພາກທີນຶ່ງໃສ່ຫົວຂໍ້ວ່າ "ຄຸນລັກສະນະຂອງຜູ້ນຳ." ພາກທີ່ສອງໃສ່ຫົວຂໍ້ວ່າ "ການສ່ຽງພັຍ." ເລີ່ມການສອນໂດຍຖາມວ່າ, ພວກທ່ານຕ້ອງການຜູ້ນຳປະເພດໃດ? ຂຽນຄຳຕອບໃສ່ໃຫ້ຖືກບ່ອນ. ຖາມ: ມີພັຍແນວໃດແດ່ທີ່ທ່ານຈະຕ້ອງສ່ຽງ ຖ້າຈະຕິດຕາມຜູ້ນຳແຕ່ລະຄົນນີ້?

### ນຳພາການສຶກສາພຣະທັມ (ໃຊ້ເວລາ 30 ນາທີ)

2. ອະທິບາຍພຣະບັນຊາຄຳສຸດທ້າຍທີ່ພຣະເຢຊູຄຣິດໄດ້ຊົງສັ່ງໄວ້ກັບສາວົກຂອງພຣະອົງ? ໃຫ້ຜູ້ນຶ່ງອ່ານກິຈການ 1:8. ຖາມ: ເປັນຫຍັງພວກສາວົກຈຶ່ງເຮັດພຽງສ່ວນນຶ່ງໃນພຣະບັນຊາ? ແມ່ນຫຍັງຊ່ວຍໃຫ້ໄດ້ເຮັດພຣະບັນຊາທີ່ຫຍັງເຫລືອຢູ່? ບອກວ່າມື້ນີ້ພວກເຮົາຈະໄດ້ເຫັນຕົວຢ່າງທີ່ດີຈາກຄຣິສຕະຈັກໃນພຣະສັນຍາໃໝ່. ພວກເຮົາຈະໄດ້ສຶກສາວິທີທີ່ຄຣິຕະຈັກຂອງພວກເຮົາຈະສາມາດເອົາຕົວຢ່າງ ເພື່ອພວກເຮົາຈະໄດ້ກາຍເປັນຄຣິສຕະຈັກ ເພື່ອການປະກາດທີ່ແທ້ຈິງ.

3. ເບິ່ງເມືອງອັນຕີໂອເຂັຽໃນແຜນທີ່ ແລະອະທິບາຍວ່າຄຣິສຕະຈັກໃນເມືອງນີ້ໄດ້ເລີ່ມການປະກາດກັບຊາວຕ່າງຊາດແລະຊາວຢິວ (11:19-26; ເບິ່ງບົດຮຽນ 8). ຖາມ: ເປັນຫຍັງການກະທຳຂອງຄຣິສຕະຈັກອັນທິໂອເຂັຽເກີດເປັນບັນຫາສຳລັບຄຣິສຕະຈັກກຸງເຢຣູຊາເລັມ?

4. ໃຫ້ຄົນນຶ່ງອ່ານກິຈການ 13:1-6 ໃນຂະນະທີ່ທຸກຄົນຟັງເບິ່ງສິ່ງທີ່ຄຣິສຕະຈັກໄດ້ເຮັດ ແລະສິ່ງທີ່ພຣະວິນຍານຊົງນຳພາໃຫ້ພວກເຂົາເຮັດ. ຖາມ: ມີຫຍັງສອງຢ່າງທີ່ຄຣິສຕະຈັກໄດ້ເຮັດເວລາໄດ້ຍິນພຣະຄຳຂອງພຣະວິນຍານ? (ນະມັສການ ແລະຖືສິນອົດອາຫານ). ອະທິບາຍເຣື່ອງການວາງມືໃສ່ຜູ້ຮັບໃຊ້. ຖາມ: ພວກເຮົາຈະເຮັດແນວໃດເພື່ອໃຫ້ໄດ້ບັນຍາກາດເໝາະສົມສຳລັບການທຳງານຂອງພຣະວິນຍານ? ຖາມ: ມີຫຍັງແດ່ທີ່ເປັນຄວາມເຂົ້າໃຈໃໝ່ໆໃນວັນເລີ່ມຕົ້ນງານການປະກາດ ໃນ 13:4-6? ເບິ່ງຫົວຂໍ້ "ຄັດເອົາແລະສົ່ງອອກ," ມີຫຍັງແດ່ທີ່ທ່ານຢາກເພີ່ມໃສ່ໃນຕອນສຸດທ້າຍຂອງບົດຮຽນພາກນີ້?

5. ໃຫ້ຄົນນຶ່ງອ່ານ 13: 13-16 ໃນຂະນະທີ່ທຸກຄົນຟັງວ່າຜູ້ປະກາດໄດ້ອອກໄປໃສ. ຖາມ: ມີເຣື່ອງສຳຄັນແນວໃດເກີດຂຶ້ນໃນພຣະທັມຂໍ້ນີ້? ສລຸບຄຳເວົ້າຂອງໂຊໂລໃນ 13:16-41.

6. ໃຫ້ຜູ້ນຶ່ງອ່ານ 13:42-52 ໃນຂະນະທີ່ທຸກຄົນສັງເກດເບິ່ງການຕອບຮັບຄຳເວົ້າຂອງໂຊໂລ. ຖາມ: ເປັນຫຍັງໂຊໂລແລະບາຣະນາບາຈຶ່ງໄປຫາຄົນຕ່າງຊາດ? ສລຸບເບິ່ງຄວາມແຕກຕ່າງເມື່ອປຽບໃສ່ 13:49-50. ຖາມ: ໂຊໂລແລະບາຣະນາບາຕອບສະຖານະການວິທີໃດ?

7. ຊີ້ໃຫ້ທຸກຄົນເບິ່ງວ່າໂປໂລແລະບາຣະນາບາໄດ້ເດີນທາງໄປເມືອງອີໂກນີອົນກ່ອນ ແລ້ວຈຶ່ງໄປຕໍ່ຍັງເມືອງລີຊະທາ. ເລົ່າເຣື່ອງສິ່ງທີ່ເກີດຂຶ້ນ ໃນ 14:1-18. ເບິ່ງ 14:19-22 ແລະຖາມ ວ່າມີໃຜແດ່ເຄີຍຖືກການຂວ່າງກ້ອນຫີນໃສ່ເໝືອນໂປໂລ ແລະເປັນຫຍັງທ່ານຈຶ່ງກັບມາເມືອງນີ້ອີກ? ຖາມ: ເປັນຫຍັງໂປໂລແລະບາຣະນາບາຈຶ່ງກັບມາເມືອງທີ່ມີການຕໍ່ຕ້ານ? ອະທິບາຍວ່າຄຣິສຕະຈັກເມືອງອັນຕີໂອເຂັຽ ແລະພວກຜູ້ປະກາດຍອມສ່ຽງພັຍເພື່ອຮັບໃຊ້ພຣະເຈົ້າ ແລະພວກເຮົາກໍຄວນເຮັດເຊັ່ນນັ້ນເໝືອນກັນ.

## <u>ນຳບົດຮຽນໄປໃຊ້ໃນຊີວິດ (ໃຊ້ເວລາ 15 ນາທີ)</u>

8. ທົບທວນເບິ່ງສິ່ງທີ່ໄດ້ບັນທຶກໄວ້ໃນບາດກ້າວທີ່ສອງ. ຖາມ: ມີຫຍັງແດ່ທີ່ພວກນັກຮຽນຕ້ອງການທີ່ຈະປ່ຽນແປງຈາກບັນຊີນັ້ນ ອີງໃສ່ບົດຮຽນທີ່ໄດ້ຮຽນມາ? ຖາມ: ບັດນີ້ ທ່ານມີຄວາມຄິດຕ່າງເກົ່າບໍ່ ກ່ຽວກັບເຣື່ອງຜູ້ນຳແລະການສ່ຽງພັຍ?

9. ຕອບຄຳຖາມໃນຕອນສຸດທ້າຍຂອງບົດຮຽນ. ແນະນຳໃຫ້ແຕ່ລະຄົນນຳຕົວຢ່າງຈາກບົດຮຽນນີ້ໄປໃຊ້. ອ້ອນວອນປິດການຮຽນໂດຍຂໍພຣະເຈົ້າຊົງຊ່ວຍແຕ່ລະຄົນໃຫ້ມີຄວາມຕຽມພ້ອມ ທີ່ຈະຕິດຕາມການຊົງນຳພາຂອງພຣະອົງສຳລັບຊີວິດ, ແລະສຳລັບຄຣິສຕະຈັກເຖິງວ່າບາງຄັ້ງອາດຈະມີການສ່ຽງພັຍ.

*ສຈ. ດຣ. ສີດນີ ດານ*

# ຄຳແນະນຳສຳລັບຄຣູສອນ
# ບົດຮຽນທີ 10
# ກັບຄືນເພັ່ງເບິ່ງພຣະເຢຊູ

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** ກິຈການ 15:1-22

**ຂໍ້ພຣະຄັມພີສຳລັບເບື້ອງຫຼັງ:** ກິຈການ 15:1-35

**ຈຸດສຳຄັນຂອງບົດຮຽນນີ້:** ຄຣິສຕະຈັກຈະຕ້ອງຈ້ອງເບິ່ງພຣະເຢຊູ ແລະປະກາດວ່າຄວາມລອດພົ້ນໄດ້ມາໂດຍທາງຄວາມເຊື່ອ ແລະບໍ່ມີຢ່າງອື່ນເພີ້ມເຕີມ.

**ຄຳຖາມເພື່ອການສຳຣວດ:** ມີຫຍັງອີກແດ່ທີ່ຈຳເປັນສຳລັບຄວາມລອດພົ້ນ ນອກຈາກຄວາມເຊື່ອໃນອົງພຣະເຢຊູຄຣິດ? ທ່ານເຄີຍຕື່ມຫຍັງໃສ່ບໍ່?

**ຈຸດປະສົງຂອງບົດຮຽນນີ້:** ເພື່ອສລຸບເບິ່ງຄວາມຫ່ວງໃຍຂອງການປະຊຸມໃນກຸງເຢຣູຊາເລັມ ແລະຢັ້ງຢືນວ່າຄວາມພົ້ນໄດ້ມາໂດຍທາງຄວາມເຊື່ອໃນພຣະເຢຊູ, ແລະບໍ່ຕ້ອງຕື່ມຫຍັງໃສ່ອີກ.

## ແຜນສຳລັບການສອນ

### ນຳເຣື່ອງເຂົ້າສູ່ຊີວິດຈິງ (ໃຊ້ເວລາ 5 ນາທີ)

1. ຖາມ: ຄຣິສຕຽນຈະຕ້ອງຮັບການບັບຕິສະມາບໍ່? ຖ້າບໍ່, ເປັນຫຍັງຈຶ່ງບັບຕິສະມາ? ເຣື່ອງສິນມະຫາສນິດຈຳເປັນບໍ່? ເປັນຫຍັງພວກເຮົາຈຶ່ງຮັບສິນມະຫາສນິດ? ໃຫ້ເວລາຕອບ. ຫລັງຈາກນັ້ນໃຫ້ຖາມ ຕາມ "ຄຳຖາມເພື່ອການສຳຣວດ." ໃຫ້ເວລາຕອບ.

### ນຳພາການສຶກສາພຣະທັມ (ໃຊ້ເວລາ 30 ນາທີ)

2. ຂຽນຫົວຂໍ້ໃຫຍ່ຂອງບົດຮຽນໃສ່ກະດານ (ຄວນຈະຂຽນໄວ້ກ່ອນນັກຮຽນຈະມາເຖິງ):

   (1) ການບໍ່ເຫັນພ້ອມ (15:1-5)
   (2) ການສົນທະນາ (15:6-12)
   (3) ຄວາມເຫັນ (15:13-22)

3. ເບິ່ງຄຳນຳໃນບົດຮຽນ. ໃຫ້ຜູ້ໃດຜູ້ນຶ່ງເຫລົ່າເຣື່ອງປະສົບການຈາກການປະຊຸມທີ່ເປັນເຣື່ອງຊວນຫົວ. (ທ່ານອາດຈະຫາເຣື່ອງມາເວົ້າເອງກໍໄດ້). ເຫລົ່າເບື້ອງຫລັງຂອງຄວາມເຫັນທີ່ແຕກຕ່າງກັນເຣື່ອງຄວາມພົ້ນ ຊຶ່ງເກືອບຈະເຮັດໃຫ້ຄຣິສຕະຈັກແຕກແຍກກັນໃນສມັຍທຳອິດ ແລະຄວາມບໍ່ເຫັນພ້ອມນັ້ນເປັນເຫດໃຫ້ຕ້ອງມີການປະຊຸມທີ່ກຸງເຢຣູຊາເລັມ ເພື່ອແກ້ໃຂບັນຫາ.

4. ໃຫ້ຄົນນຶ່ງອ່ານ ກິຈການ 15:1-5 ແລະໃຫ້ຄົນອື່ນໆຟັງເບິ່ງວ່າແມ່ນຫຍັງຄືຄວາມບໍ່ເຫັນພ້ອມ. ໃຫ້ເວລາເວົ້າ. ໃຫ້ຄົນນຶ່ງອ່ານກິຈການ 10:44-48. ຖາມ: ຄຣິສຕະຈັກເຢຣູຊາເລັມຈະຍອມຮັບໂກເນລີໂອບໍ່? ສົນທະນາວ່າເປັນ

ຫຍັງຄຣິສຕະຈັກເຢຣູຊາເລັມຈຶ່ງບໍ່ພໍໃຈກັບຄຣິສຕະຈັກອັນຕີໂອເຂັຽ. ອະທິບາຍຄວາມເຊື່ອຂອງ "ຝ່າຍຟາຣີຊາຍ" ທີ່ຄຣິສຕະຈັກເຢຣູຊາເລັມວ່າຜູ້ທີ່ເຊື່ອຈະຕ້ອງເຮັດຕາມປະເພນີຊາວຢິວຈຶ່ງຈະພົ້ນ. ອີກຂ້າງນຶ່ງ, ມີຕົວແທນຄື ເປໂຕ, ໂປໂລ, ບາຣະນາບາແລະຄຣິສຕະຈັກອັນຕີໂອເຂັຽຊຶ່ງຍອມຮັບທຸກຄົນທີ່ເຊື່ອແລະຮັບພຣະເຢຊູເປັນພຣະເຈົ້າ.

5. ໃຫ້ທຸກຄົນອ່ານກິຈການ 15:6-12 ຢ່າງງຽບໆ ເພື່ອສັງເກດວ່າເປໂຕໄດ້ເວົ້າຫຍັງ. ອະທິບາຍຄວາມໝາຍຂອງ "ອັຄສາວົກ" ແລະ "ເຖົ້າແກ່" ວ່າໝາຍເຖິງໃຜ. ໃຫ້ຄົນນຶ່ງເຫລົ່າວ່າເປໂຕໄດ້ເວົ້າຫຍັງແດ່. ສລຸບເຣື່ອງບຸກຄົນສຳຄັນໃນກອງປະຊຸມ ແລະໜ້າທີ່ຂອງພວກເຂົາເຈົ້າ:

- ຢາໂກໂບ-- ປະທານກອງປະຊຸມ
- ເປໂຕ-- ເລົ່າເຣື່ອງປະສົບການກັບໂກເນລີໂອ
- ບາຣະນາບາ-- ເລົ່າເຣື່ອງທີ່ພຣະເຈົ້າໄດ້ທຳງານຖ້າມກາງຊາວຕ່າງຊາດຈາກການປະກາດຂອງພວກເຂົາເຈົ້າ.

6. ອ່ານກິຈການ 15:13-22 ແລະໃຫ້ທຸກຄົນຟັງເບິ່ງຄຳສລຸບຂອງຢາໂກໂບ. ສົນທະນາການລົງຄວາມເຫັນ ແລະລາຍລະອຽດ. ອະທິຍາຍຄຳແນະນຳສຳລັບຊາວຕ່າງຊາດ ແລະເນັ້ນວ່າສິ່ງນັ້ນບໍ່ແມ່ນຂໍ້ແມ້ທີ່ເພີ້ມເຕີມເພື່ອຈະໄດ້ຄວາມລອດພົ້ນ. ຄວາມລອດພົ້ນໄດ້ມາເພາະຄວາມເຊື່ອໃນອົງພຣະຄຣິດຢ່າງດຽວ.

7. ຖາມ: ກອງປະຊຸມແຈ້ງຄວາມເຫັນຂອງການປະຊຸມໃຫ້ຄຣິສຕະຈັກອັນຕີໂອເຂັຽໄດ້ຊາບ ດ້ວຍວິທີໃດ? ຄວາມເຫັນໃນເທື່ອນີ້ໄດ້ແກ້ໄຂບັນຫາບໍ່? ຄຳຕອບກໍຄື "ບໍ່." ແຕ່ສິ່ງທີ່ບໍ່ປ່ຽນແປງຄື: ຄວາມລອດພົ້ນໄດ້ມາເພາະຄວາມເຊື່ອໃນອົງພຣະຄຣິດຢ່າງດຽວ.

<u>ນຳບົດຮຽນໄປໃຊ້ໃນຊີວິດ (ໃຊ້ເວລາ 15 ນາທີ)</u>

8. ຕອບຄຳຖາມ 1,2,3 ໃນສ່ວນທ້າຍຂອງບົດຮຽນ ເພື່ອຊ່ວຍຄວາມເຂົ້າໃຈບົດຮຽນນີ້. ຖາມ: ບົດຮຽນນີ້ຈະຊ່ວຍທ່ານຢ່າງໃດ ເວລາເຊີນຄົນໃຫ້ມາເປັນຄຣິສຕຽນ? ໃຫ້ເວລາສົນທະນາ ຫລືແບ່ງປັນປະສົບການ. ຖາມ: ບົດຮຽນນີ້ມີຄວາມໝາຍແນວໃດສຳລັບຕົວທ່ານ ເວລາພິຈາຣະນາເບິ່ງຄວາມພົ້ນຂອງຕົວເອງ? ໃຊ້ຄຳເວົ້າຈາກ "ຈຸດສຳຄັນຂອງບົດຮຽນ" ແລະໃຫ້ທຸກຄົນຕື່ມຄວາມທີ່ຂາດຈາກຂໍ້ຄວາມຕໍ່ໄປນີ້: ຄວາມລອດພົ້ນໄດ້ມາໂດຍທາງ ___ __________ ແລະບໍ່ມີ_________ເພີ້ມເຕີມ. ອ້ອນວອນປິດການຮຽນ.

*ສຈ. ດຣ. ສິດນີ ຄານ*

# ບົດແນະນຳຄູສອນ

## ບົດຮຽນທີ 11

## ປະໂຫຍດຂອງຂ່າວປະເສີດ

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** ກິຈການ 16:1-40

**ຂໍ້ພຣະຄັມທັງໝົດສຳລັບບົດຮຽນນີ້:** ກິຈການ 15:36--16:40

**ຈຸດສຳຄັນຂອງບົດຮຽນນີ້:** ສອນໃຫ້ຮູ້ວ່າຂ່າວປະເສີດເຣື່ອງພຣະເຢຊູດີສຳລັບທຸກຄົນ.

**ຄຳຖາມເພື່ອການສຳຣວດ:** ໂບດຂອງທ່ານໄດ້ປະກາດກັບທຸກຊົນຊັ້ນບໍ່?

**ຈຸດປະສົງຂອງບົດຮຽນນີ້:** ສົມທຽບນາງລີເດັຽແລະນາຍທັມມະໂຮງຮັບເຊື່ອ.

### ບົດນຳ

ພຣະເຈົ້າຊົງເມດຕາສົງສານຕໍ່ຄົນທຸກຊາດທຸກພາສາແລະທຸກຊັ້ນຄົນ ດ້ວຍວ່າພຣະອົງຊົງເຫັນເຮົາທັງຫລາຍເປັນຄົນຜິດຄົນບາບບໍ່ສາມາດຊ່ອຍຕົນເອງໃຫ້ພົ້ນຈາກຄວາມຜິດບາບໄດ້ ຈຶ່ງສົ່ງພຣະບຸດອົງດຽວຂອງພຣະອົງລົງມາໃນໂລກເພື່ອເປັນຄ່າໄຖ່ມະນຸດທັງຫລາຍ, ເມື່ອພຣະອົງຊົງສເດັດກັບໄປສູ່ພຣະບິດາແລ້ວກໍຊົງມອບໜ້າທີ່ນີ້ໃຫ້ແກ່ຜູ້ຮັບໃຊ້ພຣະອົງຕໍ່ໆກັນມາຈົນເຖິງປັຈຸບັນນີ້ ດັ່ງນັ້ນຜູ້ປະກາດຂ່າວປະເສີດທຸກຄົນຄວນເຫັນວ່າຕົນເອງມີໜ້າທີ່ອັນສຳຄັນທີ່ສຸດ.

1. <u>ກິຈການ 16:1-12 ຊົງໃຊ້ໂປໂລແລະຊີລາໄປເມືອງຟີລິປອຍ</u>

ກ. ໂປໂລປະຕິບັດກົດທີ່ພວກເຖົ້າແກ່ຕົກລົງກັນທີ່ກຸງເຢຣູຊາເລັມ ໂດຍເຮັດພິທີຕັດໃຫ້ໜຸ່ມຕີໂມທຽວ.

ຂ. ຄຳຕົກລົງຂອງເຖົ້າແກ່ອ່ານບົດ 15 ແມ່ນໃຫ້ທຸກຄົນທີ່ບໍ່ແມ່ນຄົນຢິວຮັບພິທີຕັດສາກ່ອນຈຶ່ງເປັນຄຣິສຕຽນ.

ຄ. ຕີໂມທຽວເປັນລູກເຄິ່ງຢິວ ເຄິ່ງກຣີກຈຳເປັນໂປໂລຕ້ອງເຮັດພິທີຕັດເພື່ອຈະໄດ້ຕີໂມທຽວໄປນຳ (ຂໍ້ 1).

ງ. ຂໍ້ສັງເກດ: ໂປໂລຢາກໄດ້ຕີໂມທຽວໄປນຳດ້ວຍເຫັນລາວເປັນຄຣິສຕຽນທີ່ດີ, ເປັນທີ່ນັບຖືຂອງຄຣິສຕຽນແລະຄົນທົ່ວໄປທັງເມືອງລີຊະທາ ແລະເມືອງອີໂກນີອົນ (ຂໍ້ 3).

ຈ. ທຸກບ່ອນທີ່ໂປໂລຜ່ານໄປກໍໄດ້ມອບຂໍ້ບັງຄັບທີ່ພວກອັຄສາວົກແລະພວກເຖົ້າແກ່ຕົກລົງກັນທີ່ກຸງເຢຣູຊາເລັມໃຫ້ ແປວ່າທ່ານໄດ້ສັ່ງສອນເຣື່ອງກົດເຫລົ່ານີ້ ແລະເຂົາປະຕິບັດຕາມ (ຂໍ້ 4).

ສ. ທຸກຄຣິສຕະຈັກປະຕິບັດຣະບຽບຫລືມີຣະບຽບແລະເຂັ້ມແຂງໃນຄວາມເຊື່ອ ຄຣິສຈັກກໍຈະເຣີນ (ຂໍ້ 5).

ຊ. ພຣະວິຍານພຣະເຈົ້າຊົງນຳໂປໂລຂໍ້ 6-9 ຢ່າງໃດ ພຣະວິນຍານອົງດຽວກໍຈະນຳຜູ້ຮັບໃຊ້ສມັຍນີ້ຢ່າງນັ້ນ.

ຍ. ພຣະເຈົ້າຊົງຕອບຄຳອ້ອນວອນຂອງຊາຍມັກກາໂດເນັຽ ໂດຍໃຫ້ໂປໂລເຫັນນິມິດນັ້ນ (ຂໍ້ 9).

ດ. ຂໍ້ສັງເກດ: ໂປໂລຢາກໄປບ່ອນນຶ່ງ ແຕ່ພຣະວິນຍານສົ່ງໄປອີກບ່ອນນຶ່ງ (ຂໍ້ 6-10).

1. ໂປໂລຢາກໄປເພາະຄິດວ່າແມ່ນບ່ອນພຣະເຈົ້າສົ່ງໄປ.
2. ເມື່ອພຣະເຈົ້າປ່ຽນທາງໂປໂລກໍຮັບຄຳສັ່ງນັ້ນທັນທີ.
3. 1 ແລະ 2 ຂ້າງເທິງນີ້ເຮົາຄວນເອົາມາເປັນແບບຢ່າງການຮັບໃຊ້ຂອງເຮົາ.

ຕ. ພຣະເຈົ້າສົ່ງໂປໂລໄປຍັງບ່ອນຄົນບໍ່ເຊື່ອພຣະເຈົ້າ ແລະພັກຢູ່ທີ່ນັ້ນເພື່ອຖ້າການຊົງນຳ(ຂໍ້ 11-12).

2. <u>ກິຈການ 16:13-15 ພຣະທັມສຳລັບຄົນຮັ່ງມີ</u>

ກ. ວັນຊະບາໂຕໂປໂລຊອກບ່ອນນະມັສການແລະໄຫວ້ວອນ ເປັນແບບຢ່າງໃຫ້ຄຣິສຕຽນສມັຍນີ້ ບໍ່ວ່າຈະໄປບ້ານເມືອງອື່ນໃກໃດໆ ສົມຄວນຊອກຫາບ່ອນນະມັສການ(ຂໍ້ 13).

ຂ. ດ້ວຍວ່າເມື່ອງນັ້ນບໍ່ມີໂບດ  ພຣະວິນຍານບໍຣິສຸດບັນດານໃຈໂປໂລໃຫ້ເລືອກເອົາແຄມນ້ຳເປັນບ່ອນອ້ອນວອນ ເພື່ອຈະພົບກັບບຸກຄົນທີ່ພຣະອົງຕຽມໃຈໃຫ້ຟັງພຣະທັມຈາກໂປໂລ (ຂໍ້ 13).

ຄ. ໂປໂລໄດ້ໂອ້ລົມກັບພວກຜູ້ຍິງທີ່ແຄມນ້ຳ ແປວ່າເວົ້າພຣະທັມພຣະເຈົ້າໃຫ້ເຂົາຟັງ ແຕ່ປາກົດວ່າມີແຕ່ຜູ້ດຽວສົນໃຈໃນພຣະທັມ ດ້ວຍວ່າພຣະເຈົ້າຊົງເປີດໃຈລາວ (ຂໍ້ 14).

ງ. ນາງເປັນຄົນຂາຍຜ້າສີມ່ວງອ່ອນ ເປັນຜ້າຣາຄາແພງ ແລະຜ້າສີມ່ວງນີ້ພວກເຈົ້ານາຍແລະຄົນຮັ່ງມີນິຍົມກັນໃສ່ ດັ່ງນັ້ນຜູ້ຂາຍກໍຕ້ອງເປັນຄົນຮັ່ງມີ( ຂໍ້ 14).

ຈ. ເມື່ອນາງຕ້ອນຮັບເອົາພຣະທັມເຂົ້າໃນໃຈ ໂປໂລກໍໃຫ້ບັບຕິສມາທັງຄົວເຮືອນທີ່ແມ່ນ້ຳນັ້ນທັນທີ (ຂໍ້ 15).

## 3. <u>ກິຈການ 16: 16-40 ພຣະທັມປາບອຳນາດຜີແລະຊ່ອຍຄົນ</u>

ກ. ຍິງມີຜີສິງສາຣະພາບວ່າໂປໂລແລະຊີລາເປັນຜູ້ຮັບໃຊ້ພຣະເຈົ້າອົງສູງສຸດ  ພຣະອົງໃຊ້ທ່ານທັງສອງມາບອກຄົນທັງຫລາຍໃຫ້ຮູ້ທາງແຫ່ງຄວາມພົ້ນ (ຂໍ້ 16-17).

ຂ. ນາງນີ້ໄດ້ຮ້ອງເວົ້າແຕ່ຄວາມເກົ່າຕັ້ງຫລາຍວັນຈົນໂປໂລໃຈຮ້າຍຈຶ່ງສັ່ງຜີນັ້ນວ່າ  "*ໃນນາມແຫ່ງພຣະເຢຊູຄຣິດ ກູສັ່ງມຶງຈົ່ງອອກຈາກຍິງນັ້ນເສັຽ* " (ຂໍ້ 18).

1. ທ່ານແລະຂ້າພະເຈົ້າສາມາດໄລ່ຜີອອກໄດ້ ແຕ່ຕ້ອງແມ່ນໃນນາມຂອງພຣະເຢຊູຄຣິດ.
2. ເມື່ອໂປໂລສັ່ງຜີໃນນາມແຫ່ງພຣະເຢຊູຄຣິດຜີກໍອອກທັນທີ ແຕ່ພຣະຄັມພີບໍ່ໄດ້ບອກອີກກ່ຽວກັບຊີວິດຂອງນາງ. ແຕ່ມີສາສນາສາດໃຫ້ຄຳເຫັນວ່ານາງຄົນໃຊ້ຜູ້ທີ່ມີຜີສິງ ແລະນາງລີເດັຽຄົນຮັ່ງມີແລະນາຍທັມມະໂຮງໄດ້ຮ່ວມມືກັນປະກາດເຣື່ອງພຣະເຢຊູ ແລະກໍກາຍເປັນໂບດໃນເມືອງນັ້ນ.
3. ພຣະຄັມພີໃຊ້ຄຳວ່າມຶງ ແມ່ນການນັ້ນນ້ຳໜັກສຽງໃຫ້ເປັນການສັ່ງຜີ, ແຕ່ບໍ່ສົມຄວນໃຊ້ໃນສັງຄົມຄຣິສຕຽນ.

ຄ. ນາງຜູ້ນີ້ມີນາຍ ແລະພວກນາຍດີໃຈທີ່ມີຜີສິງນາງ ເພາະນາງເປັນຄົນຮັບຈ້າງດູນໍຫາເງິນໃຫ້ເຂົາ.

ງ. ພວກນາຍຈ້າງຫາເຣື່ອງເອົາໂປໂລເຂົ້າຄຸກ (ຂໍ້ 19-24).

ຈ. ໂປໂລແລະຊີລາບໍ່ຈົ່ມວ່າ, ບໍ່ເສົ້າໝອງໃນຂນະຢູ່ໃນຄຸກ ແຕ່ກັບຮ້ອງເພງສັຣເສີນພຣະເຈົ້າ (ຂໍ້ 25):ປັນບົດຮຽນໃຫ້ເຮົາສັຣເສີນພຣະເຈົ້າໃນຍາມຍາກລຳບາກ.

ສ. ຫາກຍາມຍາກລຳບາກປະຊາຊົນຂອງພຣະເຈົ້າຍັງສັຣເສີນຢູ່ກໍຈະເຫັນການອັສຈັນ (ຂໍ້ 26).

ຊ. ນາຍທັມມະໂຮງພະຍາຍາມຂ້າຕົວເອງເພາະລາວຮູ້ວ່າລາວຕ້ອງຖືກປະຫານເມື່ອນັກໂທດທີ່ລບໜີ (ຂໍ້ 27)

ຍ. ໂປໂລຕໍ່ຊີວິດໃຫ້ລາວ (ຂໍ້ 28).

ດ. ການຂອບໃຈນາຍທັມມະໂຮງ  (ຂໍ້ 29).

ຕ. ນາຍທັມມະໂຮງສແວງຫາຊີວິດນິຣັນ ແລະໂປໂລກໍບອກທາງໃຫ້ ນາຍທັມມະໂຮງກໍຮັບເອົາ(ຂ 30-33).

ຖ. ຄວາມຊົມຊື່ນຍິນດີຂອງນາຍທັມມະໂຮງ (ຂໍ້ 34).

ທ. ທາງການສັ່ງປ່ອຍ ໂປໂລແລະຊີລາ ແລ້ວທັງສອງກໍປະກາດຕໍ່ໄປ (ຂໍ້ 35-40).

*ສຈ. ດຣ. ທຸມພັນ ວົງສຸຣິດທ໌*

## ບົດແນະນຳຄູສອນ
## ບົດຮຽນທີ 12
## ປະກາດກັບຜູ້ບໍ່ເຊື່ອ

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** ກິຈການ 17:10-11, 16-34
**ຂໍ້ພຣະຄັມທັງໝົດສຳລັບບົດຮຽນນີ້:** ກິຈການ 17:10--34
**ຈຸດສຳຄັນຂອງບົດຮຽນນີ້:** ສອນໃຫ້ຄົນໃນໂບດແບ່ງປັນຂ່າວປະເສີດແກ່ຜູ້ບໍ່ເຊື່ອ
**ຄຳຖາມເພື່ອການສຳຣວດ:** ເຮົາຈະປະກາດແກ່ຜູ້ບໍ່ເຊື່ອແນວໃດ?
**ຈຸດປະສົງຂອງບົດຮຽນນີ້:** ເພື່ອຊອກຫາວິທີທາງປະກາດກັບຜູ້ບໍ່ເຊື່ອ

**ໜ້າທີ່ສຳຄັນຂອງຄຣິສຕຽນທຸກຄົນໃຫ້ເຂົ້າໃຈວ່າ**

- ພຣະຄັມພີເທົ່ານັ້ນເປັນຣິດອຳນາດນຳພາທາງແຫ່ງຊີວິດໃນການເຮັດພາຣະໜ້າທີ່ການຮັບໃຊ້.
- ເພື່ອແບ່ງປັນຂ່າວປະເສີດແກ່ທຸກຄົນໂດຍບໍ່ເລືອກໜ້າ.
- ຊັກຊວນໄພ່ພົນຂອງອົງພຣະຜູ້ເປັນເຈົ້າໃຫ້ຖວາຍຕົວຮັບໃຊ້.
- ມະນຸສທຸກຄົນຖືກສ້າງໃຫ້ມີຮູບຮ່າງຄ້າຍຄືພຣະເຈົ້າ.

## ບົດນຳ

ພຣະທັມກິຈການແມ່ນບັນທຶກເຣື່ອງຣາວແລະການປະກາດຂອງພວກສາວົກ ສເພາະຢ່າງຍິ່ງແມ່ນເຣື່ອງຂອງໂປໂລທີ່ທ່ຽວປະກາດດ້ວຍຄວາມຍາກລຳບາກນາງປະການ ການຖືກຂ້ຽນຕີ້, ການຖືກຂັງຄຸກ, ການຖືກເຍາະເຍີ້ຍ ຕລອດເຖິງອຸປສັກໃນການເດີນທາງ ແຕ່ເພິ່ນກໍໄດ້ລາງຄົນມາເຊື່ອພຣະເຈົ້າ.

**1. ຂໍໃຫ້ນັກຮຽນຈັກສອງຄົນກ່າວເຣື່ອງການອອກໄປປະກາດພົບຄວາມລຳບາກຫຍັງແດ່?**

**2. ອ່ານ ກິຈການ 17:10-11 ເທສນາໃນໂຮງທັມເບອາຣອຍ**

ກ. ຄົນໃນເມືອງເບອາຣອຍສົນໃຈພຣະທັມ ຜູ້ບັນທຶກພຣະທັມຕອນນີ້ແມ່ນລູກາຮ້ອງພວກນີ້ວ່າໃຈສູງສົ່ງ.
ຂ. ລູກາຮ້ອງວ່າໃຈສູງສົ່ງເພາະວ່າເຂົາມີໃຈເຫລື້ອມໃສຮັບເອົາພຣະທັມ ແລະອ່ານພຣະທັມເພື່ອຄົ້ນຄວ້າຫາຄວາມຈິງ.
ຄ. ທຸກຄົນທີ່ຄົ້ນຄວ້າພຣະທັມພຣະເຈົ້າຊີວິດຈະຕ້ອງປ່ຽນແປງ ອ່ານ ເຮັບເຣີ 4:12
ງ. ອາທິບາຍພຣະທັມເໝືອນດາບສອງຄົມ.

**3. ອ່ານກິຈການ 17:16-18 ໂປໂລທີ່ກຸງອາແຖນ**

ກ. ໂປໂລໄປເຖິງກຸງອາແຖນກ່ອນຊີລາແລະຕີໂມທຽວຈຶ່ງລໍຖ້າທັງສອງມາຮອດຈຶ່ງປະກາດພ້ອມກັນ.
ຂ. ໃນຂະນະທີ່ໂປໂລກຳລັງລໍຖ້າເພິ່ນຍ່າງສັງເກດຕົວເມືອງເພື່ອຫາວິທີປະກາດ ແຕ່ແລ້ວເພິ່ນກໍເຄືອງໃຈທີ່ເຫັນເມືອງນີ້ເຕັມໄປດ້ວຍພຣະທຽມ.

ຄ. ໂປໂລເຂົ້າໄປຖົກຖຽງກັບພວກຢິວທີ່ໂຮງທັມ ດ້ວຍໂປໂລເຫັນວ່າພວກເຂົາບໍ່ຕັ້ງໃຈໃນການປະກາດ.

ງ. ພວກນັກປາດເອປີກູຣຽວຮ້ອງໂປໂລວ່າ ຄົນເກັບເລັມຄວາມຮູ້ເປັນການດູຖູກໃຫ້ໂປໂລເສັຽກຽດຕິຍົດ.

ຈ. ເອປີກູຣຽວ ແມ່ນໂຮງຮຽນສອນປັຊະຍາ

ສ. ຊະໂຕອິໂກ ແມ່ນນັກປັຊຍາຊາວຢູໂຣບ (ຄົນມີຄວາມຮູ້ສູງ)

ຊ. ຄົນເຫລົ່ານີ້ບໍ່ເຊື່ອການຄືນມາຈາກຕາຍຂອງພຣະເຢຊູ.

4. <u>ກິຈການ 17:19-34 ໂປໂລເວົ້າໃຫ້ນັກປາດຟັງ</u>

ກ. ເຂົາຈັບໂປໂລໄປສະພາອາເຣໂອປາໂຄ ສານສູງສຸດເພື່ອຕັດສິນຄວາມກ່ຽວກັບເຣື່ອງສາສນາ.

ຂ. ຄົນໃນສະພາແມ່ນຄົນກຣີກ ໂຈດຖາມໂປໂລ ກ່ຽວກັບຄຳເທສນາຂອງເພິ່ນ.

ຄ. ກຸງອາແຖນເປັນເມືອງໃຫຍ່ ແລະມີຄົນຫລວງຫລາຍ ແລະບໍ່ສົນໃຈເຣື່ອງອື່ນໃດນອກຈາກການທຳມາຫາກິນ ແລະຮຽນຮູ້ເຣື່ອງໃໝ່ໆເທົ່ານັ້ນ.

ງ. ໂປໂລເລີ້ມຕົ້ນເລົ່າເຣື່ອງແທ່ນບູຊາທີ່ເຂົາສລັກວ່າ ແດ່ພຣະເຈົ້າບໍ່ຮູ້ຈັກ

ຈ. ໂປໂລບອກວ່າພຣະເຈົ້າທີ່ພວກທ່ານບໍ່ຮູ້ຈັກນັ້ນແຫລະທີ່ຂ້າພະເຈົ້າມາປະກາດ ຫລືພວກທ່ານບໍ່ຮູ້ແຕ່ຂ້າພະເຈົ້າຮູ້ຈັກພຣະເຈົ້າອົງນີ້.

ສ, ໂປໂລບອກເຂົາວ່າພຣະອົງຊົງເປັນພຣະຜູ້ສ້າງທຸກສິ່ງ.

ຊ. ໂປໂລອ້າງເຖິງນັກກາບກອນຂອງຊາວກຣີກເອງທີ່ກ່າວວ່າ ເຮົາທັງຫລາຍເປັນເຊື້ອສາຍຂອງພຣະເຈົ້າ ຫາກເປັນເຊື້ອສາຍຂອງພຣະເຈົ້າແລ້ວ ຈຳຕ້ອງໄປຂາບໄຫວ້ຮູບໂຄຣົບຕ່າງ ໆແນວໃດ?

ຍ. ໂປໂລລົງທ້າຍດ້ວຍການຄືນມາຈາກຕາຍຂອງພຣະເຢຊູຄຣິດ ທີ່ເຂົາບໍ່ເຄີຍເຊື່ອມາກ່ອນ ດັ່ງນັ້ນເຂົາຈຶ່ງເວົ້າເຍາະເຍີ້ຍເພິ່ນວ່າ ພວກເຮົາຈະຄອຍຟັງທ່ານກ່າວເຣື່ອງນີ້ອີກ ແຕ່ລາງຄົນຮັບເຊື່ອໃນວັນນັ້ນ.

<u>ຄຳຖາມ:</u>

1. ເຮົາໄດ້ຮຽນຫຍັງຈາກການປະກາດຂອງໂປໂລແດ່?

2. ເຮັດແນວໃດເຮົາຈຶ່ງຈະມີໃຈກ້າຄືໂປໂລ?

3. ໂປໂລຕິຕຽນຄຣິສຕຽນທີ່ກຸງອາແຖນວ່າບໍ່ຕັ້ງໃຈປະກາດ, ສອນທ່ານແນວໃດ?

4. ເປັນຫຍັງພວກນັກປາດຈຶ່ງຢາກຟັງຄຳເທສນາຈາກໂປໂລ?

*ສຈ. ດຣ. ທຸມພັນ ວົງສຸຣິດທ໌*

# ບົດແນະນຳຄຣູສອນ
# ບົດຮຽນທີ 13
# ຊຸກຍູ້ຄົນໃນປະກາດກັບຄົນນອກ

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** ກິຈການ 19:8-10; 20:18-35

**ຂໍ້ພຣະຄັມທັງໝົດສຳລັບບົດຮຽນນີ້:** ກິຈການ 19-20

**ຈຸດສຳຄັນຂອງບົດຮຽນນີ້:** ໂບດຄວນມີການຊ່ອຍເຫລືອແລະປະກາດໄປພ້ອມກັນ

**ຄຳຖາມເພື່ອການສຳຣວດ:** ໂບດຂອງເຮົາມີຫຍັງຈະຕ້ອງດັດແປງບໍ່?

**ຈຸດປະສົງຂອງບົດຮຽນນີ້:** ເພື່ອຊອກຫາວິທີຊ່ອຍຄົນໃນແລະຫາວິທີປະກາດຄົນນອກ

## ຄຳແນະນຳ

**1. ອ່ານກິຈການ 19:8-10 ການສອນຂອງໂປໂລ**

ກ. ໂປໂລເທສນາສັ່ງສອນທີ່ໂຮງທັມມະເທສນາເມືອງເອເຟໂຊເປັນເວລາສາມເດືອນ.

ຂ. ໂປໂລສອນທັງຄົນຢິວແລະຄົນກຣີກ.

1. ຄົນຢິວເຊື່ອກົດໂມເຊ ແຕ່ບໍ່ເຊື່ອວ່າພຣະເຢຊູເປັນພຣະເຈົ້າ, ບໍ່ເຊື່ອການຄືນມາຈາກຕາຍ.
2. ຄົນກຣີກ ເປັນເຈົ້ານາຍປົກຄອງຢິວ, ບໍ່ເຊື່ອກົດໂມເຊ ແລະບໍ່ເຊື່ອພຣະເຢຊູຄຣິດອີກ ແຕ່ເຊື່ອພະຕ່າງ ໆ ເພື່ອສແວງຫາພຣະເຈົ້າອົງທ່ຽງແທ້.

ຄ. ທັງຄົນຢິວ ແລະຄົນກຣີກຕໍ່ສູ້ໂປໂລ ດັ່ງນັ້ນໂປໂລຈຶ່ງໜີໄປຊ້ອນຢູ່ບ່ອນອື່ນ.

ງ. ໂປໂລເລືອກເອົາລູກສິດໄປນຳ, ລູກສິດກຸ່ມນີ້ເປັນລູກສິດທີ່ມີຄຸນນະພາບໃນການເຊື່ອຖື, ການປະຕິບັດ ແລະການສິດສອນເປັນຢ່າງດີ.

**2. ອ່ານກິຈການ 20:18-20 ຄຳປາໄສຂອງໂປໂລ**

ກ. ໂປໂລແລະລູກສິດກຸ່ມນີ້ຖືກທ່ານ ຕີຣາໂນ ເຊີນໄປສອນທີ່ຫ້ອງປະຊຸມເພິ່ນທຸກ ໆວັນເປັນເວລາສອງປີ ຈາກ 11ໂມງເຊົ້າ ເຖິງ 4 ໂມງແລງ ຊຶ່ງເປັນຍາມເລີກການຕອນບ່າຍຂອງພວກກຣີກ.

ຂ. ສອງປີກັບສາມເດືອນທີ່ໂປໂລເທສນາສັ່ງສອນເມືອງເອເຟໂຊມີຜູ້ເຊື່ອຫລວງຫລາຍ ແລະຜູ້ຕໍ່ຕ້ານ ກໍພາຍມາກ ດັ່ງນັ້ນເພິ່ນຈຶ່ງໜີໄປແຂວງມາກາໂກເນັຽແລະປະເທດກຣີກຊົ່ວຄາວຈົນເຣື່ອງເຢັນລົງ.

ຄ. ໂປໂລກັບປຸ້ຽມຢາມພວກເຖົ້າແກ່ໃນເມືອງເອເຟໂຊເພື່ອສັ່ງລາ, ສັ່ງສອນເຕືອນສະຕິ, ເພື່ອຊັກຊວນ ໃຫ້ຕັ້ງໃຈປະກາດ, ເພື່ອເລົ້າໂລມໃຈບໍ່ໃຫ້ທໍ້ຖອຍ.

**3. ອ່ານກິຈການ 20: 22-27 ໜ້າທີ່ຂອງໂປໂລ**

ກ. ມອບຕົວໃຫ້ພຣະວິນຍານບໍຣິສຸດນຳພາ, ທາງໜ້າສຸດແລ້ວແຕ່ພຣະອົງ.

ຂ. ໂປໂລເຫັນຂ່າວປະເສີດມີຄ່າມາກມາຍກວ່າຊີວິດຂອງເພິ່ນ.

ຄ. ໂປໂລຈະຕັ້ງໃຈເຮັດໜ້າທີ່ຈົນສຳເຣັດ. (ຊັກຖາມນັກຮຽນວ່າເຂົ້າໃຈແນວໃດ?).

ງ. ນໍາພານັກຮຽນເອົາແບບຢ່າງໂປໂລ.

## 4. ອ່ານກິຈການ 20:28-31 ຄໍາຕັກເຕືອນຂອງໂປໂລ

ກ. ຕັກເຕືອນໃຫ້ຣະວັງຕົວ

ຂ. ຣະວັງເຝົ້າຮັກສາຝູງແກະ

ຄ. ໃຫ້ຮູ້ວ່າຝູງແກະນັ້ນໄດ້ມາໂດຍພຣະໂລຫິດ (ຊີວິດພຣະເຢຊູ).

1. ໃຫ້ຮູ້ວ່າພຣະເຈົ້າຊົງຮ້ອງມາເປັນເຖົ້າແກ່ ເພື່ອດູແລ ແລະເບິ່ງແຍງ
2. ເຖົ້າແກ່ຮັບໜ້າທີ່ມອບໝາຍອັນສໍາຄັນ ຄືຊີວິດຝ່າຍວິນຍານຂອງລູກແກະ.

ງ. ເຕືອນວ່າຈະມີໝາໄນມາກັດແກະ.

1. ໝາໄນຈາກພາຍນອກ.
2. ຄົນພາຍໃນຈະປິ້ນຄວາມຈິງ.

## 5. ອ່ານກິຈການ 20:32-35 ຝາກໄວ້ກັບພຣະເຈົ້າ

ກ. ໂປໂລມາໃນນາມພຣະເຈົ້າ ຕໍ່ໄປຈະບໍ່ໄດ້ມາຈຶ່ງຝາກໄວ້ກັບພຣະເຈົ້າ ແລະໃນພຣະທັມຂອງພຣະອົງ.

1. ໃຫ້ພຣະເຈົ້າຊົງສ້າງຂຶ້ນໃໝ່.
2. ເພື່ອເຂົາຈະຮັບມໍຣະດົກຮ່ວມກັບພວກທີ່ພຣະເຈົ້າຊົງຊໍາຣະແລ້ວ.
3. ມໍຣະດົກບໍ່ແມ່ນໃນໂລກນີ້ ແຕ່ແມ່ນເຣື່ອງຂອງຟ້າສວັນ.

ຂ. ໂປເລົ່າເຖິງຄວາມສັດຊື່ຂອງເພິ່ນ ເພື່ອເປັນຕົວຢ່າງໃຫ້ເຖົ້າແກ່ສັດຊື່ຄືເພິ່ນ.

ຄ. ໂປໂລຄຶດເຖິງພຣະທັມເຣື່ອງເອົາໃຫ້ມີຄວາມສຸກໃຈກວ່າໄດ້ຮັບ.

1. ພຣະທັມທີ່ໂປໂລເວົ້າເຖິງບໍ່ໄດ້ບັນບັກທຶກນອກຈາກຈະເຫັນໃນ ລູກາ 6:38.
2. ບາງທີໂປໂລອາຈໝາຍເຖິງຕົວເພິ່ນຫາກໄດ້ເອົາພຣະທັມໃຫ້ແລ້ວກໍມີຄວາມສຸກ.

ຄໍາຖາມ:

1. ດ້ວຍເຫດໃດໂປໂລຈຶ່ງຍອມທົນທຸກຍາກລໍາບາກຍ້ອນຂ່າວປະເສີດ?

2. ຊີວິດຂອງໂປໂລເປັນຜົນປະໂຫຍດຫຍັງແກ່ເຮົາແດ່?

3. ເຮັດແນວໃດເຮົາຈຶ່ງຈະເປັນຄືໂປໂລໄດ້

4. ຫາກເຮົາບໍ່ປະກາດ ເຮັດແນວໃດຍາດພີ່ນ້ອງແລະຄົນທີ່ເຮົາພົບເຫັນຈຶ່ງຈະໄດ້ຍິນເຣື່ອງພຣະເຈົ້າ.

*ສຈ. ດຣ. ທຸນພັນ ວົງສຸຣິດທ໌*

<u>ບົດແນະນຳຄູສອນ</u>

<u>ພຣະເຢຊູຟື້ນແທ້</u>

<u>ບົດຮຽນເຣື່ອງການຟື້ນພຣະຊົນ</u>

---

**<u>ຂໍ້ພຣະຄັມພີສຳລັບບົດຮຽນນີ້:</u>** ລູກາ 24:13-35

**<u>ຂໍ້ພຣະຄັມທັງຫມົດສຳລັບບົດຮຽນນີ້:</u>** ລູກາ 24

**<u>ຈຸດສຳຄັນຂອງບົດຮຽນນີ້:</u>** ເຮົາຮູ້ວ່າພຣະອົງຟື້ນແລ້ວເຮົາຕ້ອງບອກຜູ້ອື່ນ.

**<u>ຄຳຖາມເພື່ອການສຳຣວດ:</u>** ເຮົາຈະເຮັດແນວໃດຈື່ງຈະບອກຜູ້ອື່ນໄດ້.

**<u>ຈຸດປະສົງຂອງບົດຮຽນນີ້:</u>** ເພື່ອຊອກຫາຊ່ອງທາງບອກຜູ້ອື່ນກ່ຽວກັບເຣື່ອງນີ້

**<u>ຫນ້າທີ່ສຳຄັນຂອງຄຣິສຕຽນທຸກຄົນໃຫ້ເຂົ້າໃຈວ່າ</u>**

- ພຣະຄັມພີເທົ່ານັ້ນເປັນຣິດອຳນາດນຳພາທາງແຫ່ງຊີວິດໃນການເຮັດພາຣະຫນ້າທີ່ການຮັບໃຊ້
- ເພື່ອແບ່ງປັນຂ່າວປະເສີດແກ່ທຸກຄົນໂດຍບໍ່ເລືອກໜ້າ.
- ເສີມຂຍາຍຄວາມເຊື່ອໃຫ້ຈະເຣີນຂຶ້ນແຕ່ລະວັນໆ.

<u>ບົດນຳ</u>

ບົດຮຽນເຣື່ອງການຄືນພຣະຊົນວັນນີ້ເຮົາຈະເວົ້າຕອນພຣະອົງຊົງຟື້ນແລ້ວ ແລະພົບກັບສາວົກສອງຄົນຂອງພຣະອົງທີ່ຍ່າງກັບບ້ານຈາກການມາເບິ່ງພຣະອົງຕາຍທີ່ໄມ້ກາງແຂນ, ສາວົກທັງສອງຄົນນີ້ແມ່ນໃຜ? ເປັນຫຍັງພຣະອົງຈື່ງຊົງປາກົດສອງຄົນນີ້? ເມື່ອປາກົດແລ້ວເປັນຫຍັງເຂົາຈື່ງບໍ່ຮູ້ວ່າແມ່ນພຣະອົງ? ຮອດຕອນໃດເຂົາຈື່ງຮູ້ວ່າແມ່ນພຣະອົງ? ເມື່ອຮູ້ແລ້ວເຂົາເຮັດແນວໃດ?

1. <u>ອ່ານ 24:13-16 ຊົງບັງຕາ</u>

ກ. ສາວົກຜູ້ນີ້ຊື່ ກະໂປໂລ ຜູ້ຕິດແມ່ນເມັຽຂອງເພິ່ນ ເບິ່ງໂຢຮັນ 19:25.
ຄ. ທັງສອງມາຈາກເອມາອູດເພື່ອເຝົ້າເບິ່ງພຣະເຢຊູຖືກຄຶງທີ່ກາງແຂນເພື່ອຄວາມຜິດບາບຂອງເຂົາ.
ງ. ທັງສອງຍ່າງຈາກກຸງເຢຣູຊາເລັມເພື່ອກັບບ້ານເອມາອູດຣະຍະທາງປະມານ 15ໄມ.
ຈ. ທັງສອງກຳລັງລົມກັນເຣື່ອງພຣະເຢຊູຕາຍໄຖ່ບາບທີ່ໄມ້ກາງແຂນ ດ້ວຍຄວາມໂສກເສົ້າ.
ສ. ຊົງປາກົດກັບເຂົາແຕ່ຊົງບັງຕາເຂົາ (ຂໍ້ 16).

2. <u>ອ່ານ 24:17-27 ສາວົກສອງຄົນເລົ່າເຫດການ</u>

ກ. ຊົງຖາມ *ເມື່ອມາຕາມທາງພວກທ່ານໂຕ້ຖາມກັນເຣື່ອງໃດ?* ແຕ່ພຣະອົງຮູ້ແລ້ວວ່າເຂົາລົມຫຍັງກັນ
ຂ. ກ່ອນຕອບພຣະອົງເຫັນເຂົາຢຸດຢູ່ດ້ວຍໜ້າໂສກເສົ້າ
  1. ເພາະສົງສານພຣະເຢຊູທີ່ໄມ້ກາງແຂນ.
  2. ຄິດວ່າຕົນເອງໝົດຫວັງເມື່ອພຣະເຢຊູຕາຍໄປແລ້ວ.
ຄ. ເຂົາຕອບພຣະຢຊູ *"ໃນບັນດາແຂກ ເມືອງທີ່ອາສັຍຢູ່ໃນກຸງເຢຣູຊາເລັມ ມີແຕ່ທ່ານຜູ້ດຽວຫລືທີ່ບໍ່ຮູ້ເຫດການຊຶ່ງເກີດຂຶ້ນໃນລະຫວ່າງວັນເຫລົ່ານີ້".* (ຂໍ້ 18). ອາຈມີຄວາມໝາຍວ່າ ເຣື່ອງໃຫຍ່ປານນີ້ທ່ານບໍ່ຮູ້ບໍ?

ຫລືອາຈຢາກຮ້າຍວ່າເປັນຫຍັງບໍ່ຮູ້ ທັງນີ້ກໍເພາະວ່າທັງສອງກຳລັງເປັນທຸກໃຈໃນເຣື່ອງນີ້ຢູ່.

ງ. ເຂົາເລົ່າເຫດການທັງໝົດໃຫ້ພຣະອົງຟັງ ຂໍ້ 19-21.

ຈ. ເມື່ອເຂົາເລົ່າຈົບແລ້ວພຣະເຢຊູກ່າວວ່າ *ໂອ ຄົນໂງ່,* ມີຄວາມໝາຍວ່າເຂົາຮູ້ເຣື່ອງການຕາຍຂອງພຣະອົງ, ເຂົາຮູ້ເຣື່ອງຜູ້ທຳນວາຍທີ່ກ່າວໄວ້ກ່ອນແລ້ວວ່າພຣະອົງຈະເປັນຄືນມາເປັນຫຍັງຈຶ່ງບໍ່ເຂົ້າໃຈ. ຄຣິສຕຽນເຮົາສ່ວນຫລາຍຮູ້ຈັກພຣະອົງ, ແຕ່ບໍ່ເຂົ້າໃຈພຣະອົງເໝືອນສາວົກສອງຄົນບໍ່ເຂົ້າໃຈ.

ສ. ເຮົາທັງຫລາຍບໍ່ສົມຄວນແຕ່ຈະຮຽນຮູ້ພຣະອົງ ເຮົາຕ້ອງຮຽນເຂົ້າໃຈພຣະອົງດ້ວຍ.

## 3. ອ່ານ 24:28-35 ຊົງໄປໄກກວ່າທ່ານຄິດ

ກ. ພຣະອົງຊົງເຮັດຈະກາຍໄປເລີຽ (ຂໍ້ 28) ແຕ່ເຂົາທັງສອງເຊີນພຣະອົງພັກເຊົາ. ແມ່ນແລ້ວພຣະອົງມາໃກ້ບ້ານຂອງທ່ານ, ໃກ້ໃຈຂອງທ່ານຫາກບໍ່ເຊີນພຣະອົງເຂົ້າມາ ພຣະອົງກໍຈະຜ່ານໄປເລີຍ.

ຂ. ຊົງເປີດເຜີຍຕົນເອງດ້ວຍການຫັກເຂົ້າຈີ່ແລ້ວໂມທະນາພຣະຄຸນແລ້ວຍື່ນເຂົາ ເຂົາຈຶ່ງຄິດໄດ້ວ່າແມ່ນພຣະເຢຊູ (ຂໍ້ 30).

ຄ. ໃນຂະນະທີ່ຕາເຂົາເປີດອອກ ພຣະອົງກໍຊົງຫາຍໄປຈາກເຂົາ ຫາຍໄປໄກກວ່າເຂົາຄິດໄວ້(ຂໍ້ 31).

ງ. ສາວົກສອງຄົນລະນຶກການສົນທະນາຕາມທາງ ໃຈຂອງເຮົາກໍຮ້ອນຮົນພາຍໃນ ແປວ່າຈິດວິນຍານຮ້ອນເມື່ອສົນທະນາກັບພຣະອົງໃນຣະວ່າງທາງ (ຂໍ້ 32).

ຈ. ໃນໂມງນັ້ນທັງສອງກໍລຸກຍ່າງກັບຄືນໄປເຢຣູຊາເລັມຊຶ່ງເປັນເວລາກາງຄືນ, ຂໍ້ສັງເກດເວລາເຂົາເຊີນພຣະເຢຊູພັກເຊົານຳເຂົາເວົ້າວ່າ ຈວນຄໍ່າແລ້ວ (ຂໍ້ 29). ຫລັງຈາກກິນເຂົ້າແລ້ວອາຈເດີກໄປແດ່ ແຕ່ສອງຄົນບໍ່ໄດ້ລໍຖ້າວັນຣຸ່ງເຊົ້າຈຶ່ງໄປບອກພວກສາວົກໃນຣະຍະທາງ 15ໄມ ບາງທີ່ເຂົາອາຈຍ່າງໝົດຄືນ.

**<u>ຄຳຖາມ:</u>**

1. ເປັນຫຍັງພຣະເຢຊູຈຶ່ງຈົງໃຈພົບກັບສາວົກສອງຜົວເມັຍນີ້?

2. ເມື່ອພຣະເຢຊູຕາຍແລ້ວບໍ່ຄືນມາທັງສອງມີຄວາມຫວັງຫຍັງແດ່? ເຮົາເຄີມີຄວາມຫວັງຫຍັງແດ່?

3. ເປັນຫຍັງພຣະເຢຊູຈຶ່ງເຂົ້າໄປພັກເຊົາແລະກິນເຂົ້າແລງນຳເຂົາ?

4. ການເຊີນພຣະເຢຊູເຂົ້າພັກແລະກິນເຂົ້າແລງນຳຂອງພວກສາວົກ ສອນຫຍັງທ່ານແດ່?

*ສຈ. ດຣ. ທຸນພັນ ວົງສຸຣິດທ໌*